ບໍລິສັດ AGL ປະກັນໄພລາວ
Assurances General Laos

# ປະກັນໄພການເດີນທາງ - ທ່ອງທ່ຽວ

## ບົດນຳ

- **ໃຜເປັນຜູ້ທີ່ສາມາດຊື້ປະກັນໄພການເດີນທາງນີ້ໄດ້?**

ບຸກຄົນທີ່ຕ້ອງການ ການຄຸ້ມກັນ ສໍາລັບການເດີນທາງ ເຊິ່ງຄວາມໝາຍຂອງການເດີນທາງ ແມ່ນໄດ້ລະບຸໄວ້ໃນ ນິຍາມຄໍາສັບ ຂອງ "ການເດີນທາງ" (ຂໍ້ 1.12, ໜ້າ 2)

- **ສັນຍາປະກັນໄພເດີນທາງ ແລະຄ່າທໍານຽມປະກັນໄພ ຂອງທ່ານ**

ເມື່ອທ່ານສະມັກຂໍເຮັດປະກັນໄພ ໂດຍການຂຽນໃບສະເໜີເອົາການປະກັນໄພການເດີນທາງ ຮຽບຮ້ອຍແລ້ວ ບໍລິສັດຈະຢັ້ງຢືນລາຍລະອຽດ ຕ່າງໆໃຫ້ແກ່ ທ່ານດັ່ງນີ້ ການຄຸ້ມກັນທີ່ທ່ານເລືອກ, ໄລຍະເວລາການປະກັນໄພ, ຄ່າທໍານຽມປະກັນໄພ ແລະຖ້າຫາກມີເງື່ອນໄຂໃດໆທີ່ ແຕກຕ່າງຈາກ ເງື່ອນໄຂປົກກະຕິ (ບໍລິສັດ ຈະຄັດຕິດເອກະສານໃຫ້ພ້ອມ) ລາຍລະອຽດເຫຼົ່ານີ້ຈະລະບຸຢູ່ໃນ **"ສັນຍາປະກັນໄພ"** ຊຶ່ງ ບໍລິສັດຈະອອກ ໃຫ້ແກ່ທ່ານ.

ຄ່າທໍານຽມປະກັນໄພຈະແຕກຕ່າງກັນຕາມທາງເລືອກທີ່ທ່ານເລືອກ, ໄລຍະເວລາການເດີນທາງຂອງທ່ານ ແລະບຸກຄົນ ທີ່ທ່ານ ຕ້ອງການໃຫ້ໄດ້ຮັບການປະກັນໄພ, ບໍລິສັດຈະຄິດໄລ່ຈໍານວນເງິນທັງໝົດທີ່ທ່ານຕ້ອງຊໍາລະ, ຖ້າຫາກທ່ານຕົກລົງທີ່ຈະເຮັດປະກັນໄພການເດີນທາງ, ຈໍານວນເງິນດັ່ງກ່າວຈະລະບຸໄວ້ໃນ **"ສັນຍາປະກັນໄພ"** ' ຂອງທ່ານນໍາ.

ສັນຍາປະກັນໄພຈະລະບຸການຄຸ້ມກັນຕ່າງໆທີ່ບໍລິສັດ ຈະສາມາດຈັດໃຫ້ທ່ານ ຊຶ່ງທ່ານຈໍາເປັນຕ້ອງພິຈາລະນາ ຕັດສິນໃຈວ່າ ຂອບ ເຂດການຄຸ້ມກັນ, ຊະນິດ ແລະລະດັບການຄຸ້ມກັນນັ້ນເໝາະສົມກັບທ່ານ ແລະສາມາດທີ່ຈະໃຫ້ການຄຸ້ມກັນຄວາມເສຍຫາຍ ທີ່ອາດ ຈະເກີດຂຶ້ນໄດ້ຢ່າງພຽງພໍ.

ຫາກທ່ານມີຂໍ້ສົງໃສ ຕ້ອງການຂໍ້ມູນເພີ້ມເຕີມ ກ່ຽວກັບສັນຍາປະກັນໄພ ຫຼືຕ້ອງການເຮັດປະກັນໄພການເດີນທາງ ກະລຸນາຕິດຕໍ່ ພະແນກປະກັນໄພບຸກຄົນ, ເບີໂທລະສັບ (+856–21) 21 5903, 21 5162, 21 7598–99, 24 0284.

ປະກັນໄພການເດີນທາງນີ້ຮັບປະກັນໂດຍ ບໍລິສັດ AGL ປະກັນໄລາວ ແລະໃຫ້ບໍລິການ ການຊ່ວຍເຫຼືອໂດຍ ບໍລິສັດ ອາລີອັນສ໌ ເວີລວາຍ ພາດເນີ (ປະເທດໄທ) ຈໍາກັດ.

- **ຜູ້ທີ່ທ່ານສາມາດຕິດຕໍ່ຫາ ຖ້າຫາກທ່ານຕ້ອງການຄວາມຊ່ວຍເຫຼືອສຸກເສີນ 24 ຊົ່ວໂມງ.**

ອາລີອັນສ໌ ເວີລວາຍ ພາດເນີ ເປັນບໍລິສັດທີ່ໃຫ້ບໍລິການທົ່ວໂລກ ຊຶ່ງມີບໍລິສັດ ອາລີອັນສ໌ ເວີລວາຍ ພາດເນີ (ປະເທດໄທ) ຈໍາກັດ ເປັນບໍລິສັດ ໃນເຄືອ ທ່ານສາມາດຕິດຕໍ່ ອາລີອັນສ໌ ເວີລວາຍ ພາດເນີ ທຸກວັນ ຕະຫຼອດ 24 ຊົ່ວໂມງ ທີ່ໝາຍເລກສາຍດ່ວນ +66 2–305–8460 (ເກັບເງິນ ປາຍທາງ).

- **ການປິ່ນປົວຢູ່ຕ່າງປະເທດ ຫຼື ການສົ່ງຕົວກັບຄືນປະເທດ**

ບໍ່ວ່າທ່ານຕ້ອງການ ການຊ່ວຍເຫຼືອສຸກເສີນ ຢູ່ສະຖານທີ່ໃດ ຫຼືເວລາໃດ ພຽງແຕ່ທ່ານໂທມາຫາໝາຍເລກສາຍດ່ວນ ທີມງານຜູ້ຊ່ຽວຊານໃນການປິ່ນປົວຂອງ ອາລີອັນສ໌ ເວີລວາຍ ພາດເນີ ພ້ອມຈະໃຫ້ການຊ່ວຍເຫຼືອທ່ານທັນທີ, ເຄື່ອນຍ້າຍຄົນເຈັບໄປຫາສະຖານປິ່ນປົວທີ່ໃກ້ທີ່ສຸດ, ສົ່ງຕົວຄົນເຈັບກັບຄືນປະເທດ, ຕິດຕໍ່ປະສານງານກັບສະຖານທູດ ລວມທັງຕິດຕໍ່ຫາຄອບຄົວຂອງທ່ານ ແລະ ປະຕິບັດຢ່າງໄວທີ່ສຸດ.

- **ການຮຽກຮ້ອງສິນທົດແທນ**

ການຮຽກຮ້ອງຄ່າສິນໄໝທົດແທນກັບ ບໍລິສັດ ອາລີອັນສ໌ ເວີລວາຍ ພາດເນີ (ປະເທດໄທ) ຈໍາກັດ ຈະຕ້ອງກະທໍາທັນທີ ໂດຍຕິດຕໍ່ໝາຍເລກ +66 2–305–8460.

- **ສິ່ງທີ່ຄວນຮູ້** ເພື່ອປະກອບເຂົ້າໃນການຮຽກຮ້ອງສິນທົດແທນ ທ່ານຕ້ອງເກັບເອກະສານຫຼັກຖານ (ໃບຮັບເງິນສະບັບຕົ້ນ) ຂອງສິ່ງຂອງທີ່ ທ່ານມີ ຫຼືສິ່ງຂອງທີ່ສູນເສຍ ໄວ້ເພື່ອຢັ້ງຢືນກັບບໍລິສັດ.

- **ຂັ້ນຕອນໃນການຮຽກຮ້ອງສິນທົດແທນ**

ບໍລິສັດຈະພະຍາຍາມດຳເນີນການໃຫ້ແລ້ວພາຍໃນ 10 ວັນ ນັບຈາກວັນທີ ທີ່ບໍລິສັດໄດ້ຮັບແບບຟອມຮຽກຮ້ອງສິນທົດແທນ ແລະເອກະສານປະກອບຕ່າງໆ ຈາກທ່ານຄົບຖ້ວນແລ້ວ, ຖ້າຫາກບໍລິສັດຕ້ອງການເອກະສານເພີ້ມເຕີມຈາກທ່ານ ບໍລິສັດຈະຕິດຕໍ່ຫາທ່ານ ເປັນລາຍລັກ ອັກສອນ ພາຍໃນ 10 ວັນ.

- ▪ **ການຈຳກັດຄວາມຮັບຜິດຊອບຂັ້ນຕ່ຳ**

ສັນຍາປະກັນໄພນີ້ບໍ່ຈຳກັດຄວາມຮັບຜິດຊອບຂັ້ນຕ່ຳຂອງການຮຽກຮ້ອງສິນທົດແທນ

- ▪ **ການຍົກເລີກສັນຍາປະກັນໄພ**

ຖ້າຫາກທ່ານມີຈຸດປະສົງ ບໍ່ຕ້ອງການເຮັດປະກັນໄພນີ້ແລ້ວ ທ່ານສາມາດຈະຍົກເລີກສັນຍານີ້ໄດ້ ແຕ່ບໍລິສັດ ຈະບໍ່ສົ່ງຄືນຄ່າທຳນຽມປະກັນໄພ ໃດໆ ນັບຈາກວັນທີ ທີ່ສັນຍາປະກັນໄພມີຜົນບັງຄັບ ເຖິງວັນທີທີ່ຍົກເລີກສັນຍາ.

**ການປະກັນໄພການເດີນທາງ - ທ່ອງທ່ຽວ ແລະ ການບໍລິການໃຫ້ຄວາມຊ່ວຍເຫຼືອ.**

**ສັນຍາປະກັນໄພການເດີນທາງ ແລະ ຄ່າທຳນຽມປະກັນໄພ**

ສັນຍາປະກັນໄພນີ້ຊີ້ແຈງການຄຸ້ມກັນ, ນິຍາມຄຳສັບ, ເງື່ອນໄຂ ແລະ ຂໍ້ຍົກເວັ້ນຕ່າງໆ ທ່ານຈຳເປັນຕ້ອງອ່ານເນື້ອໃນ ຂອງສັນຍາຢ່າງລະອຽດ ເພື່ອໃຫ້ເຂົ້າໃຈ ແລະ ໝັ້ນໃຈວ່າຖືກຕ້ອງກັບຄວາມຕ້ອງການຂອງທ່ານ.

ສັນຍາປະກັນໄພນີ້ ພ້ອມດ້ວຍເອກະສານຢັ້ງຢືນການຄຸ້ມກັນ ແລະ ເອກະສານແນບທ້າຍອື່ນໆ ທີ່ອອກໃຫ້ໂດຍບໍລິສັດ ເປັນເອກະສານສຳຄັນ ທີ່ສະແດງວ່າ ທ່ານໄດ້ຮັບປະກັນໄພຈາກບໍລິສັດແລ້ວ, ດັ່ງນັ້ນ ທ່ານຄວນຮັກສາເອກະສານດັ່ງກ່າວໄວ້ຢ່າງດີ.

ອີງຕາມໃບສະເໜີເອົາການປະກັນໄພ ເຊິ່ງເປັນສ່ວນໜຶ່ງຂອງສັນຍາປະກັນໄພ ແລະເພື່ອເປັນການຕອບແທນ ຄ່າທຳນຽມປະກັນໄພທີ່ ຜູ້ໄດ້ຮັບການປະກັນໄພຕ້ອງຊຳລະ, ບໍລິສັດຈະຈ່າຍຜົນປະໂຫຍດຕາມເງື່ອນໄຂຂອງສັນຍາປະກັນໄພ, ການຄຸ້ມກັນ, ຂໍ້ຍົກເວັ້ນ, ຕາຕະລາງສະແດງຜົນປະໂຫຍດ ແລະເອກະສານແນບທ້າຍຂອງສັນຍາປະກັນໄພນີ້.

**1. ນິຍາມຄຳສັບ ເພື່ອໃຊ້ໃນສັນຍາປະກັນໄພ ແລະ ເອກະສານຊ້ອນທ້າຍຂອງສັນຍາປະກັນໄພສະບັບນີ້:**

1.1 ″ບໍລິສັດ " ໝາຍເຖິງ ບໍລິສັດຜູ້ຮັບປະກັນໄພ (ບໍລິສັດ AGL ປະກັນໄພລາວ).

1.2 ″ຜູ້ສະເໜີເອົາການປະກັນໄພ" ໝາຍເຖິງ ບຸກຄົນທີ່ລະບຸຊື່ເປັນຜູ້ສະເໜີເອົາປະກັນໄພໃນສັນຍາປະກັນໄພນີ້ ຊຶ່ງເປັນຜູ້ຈັດໃຫ້ມີການປະກັນໄພເພື່ອຜົນປະໂຫຍດຂອງຜູ້ໄດ້ຮັບການປະກັນໄພ.

1.3 ″ຜູ້ໄດ້ຮັບການປະກັນໄພ" ໝາຍເຖິງ ບຸກຄົນທີ່ລະບຸຊື່ເປັນຜູ້ໄດ້ຮັບການປະກັນໄພໃນສັນຍາປະກັນໄພຊຶ່ງເປັນບຸກຄົນທີ່ໄດ້ຮັບການຄຸ້ມກັນຕາມສັນຍາປະກັນໄພນີ້.

1.4 ″ສັນຍາປະກັນໄພ" ໝາຍເຖິງ ເອກະສານສະແດງຜົນປະໂຫຍດຂອງການປະກັນໄພ ເຊິ່ງລະບຸລາຍລະອຽດກ່ຽວກັບ ຜູ້ເຊັນເອົາການປະກັນໄພ, ຜູ້ທີ່ໄດ້ຮັບການປະກັນໄພ, ຂອບເຂດການຄຸ້ມກັນ ແລະ ໄລຍະເວລາການຄຸ້ມກັນ ຂອງສັນຍາປະກັນໄພສະບັບນີ້.

1.5 ″ອຸປະຕິເຫດ" ໝາຍເຖິງ ເຫດການທີ່ເກີດຂຶ້ນຢ່າງກະທັນຫັນຈາກປັດໃຈພາຍນອກຮ່າງກາຍ ແລະ ເຮັດໃຫ້ເກີດຜົນ ທີ່ຜູ້ໄດ້ຮັບການປະກັນໄພບໍ່ໄດ້ເຈດຕະນາ ຫຼື ມຸ້ງຫວັງ.

1.6 ″ການບາດເຈັບ" ໝາຍເຖິງ ການບາດເຈັບທາງດ້ານຮ່າງກາຍອັນເປັນຜົນໂດຍກົງມາຈາກອຸປະຕິເຫດ.

1.7 ″ການເຈັບເປັນ" ໝາຍເຖິງ ການປ່ວຍໄຂ້ ທີ່ເກີດຂຶ້ນໃນລະຫ່ວາງການເດີນທາງພາຍໃນໄລຍະເວລາປະກັນໄພ ແລະ ບໍ່ໄດ້ເປັນຜົນສືບເນື່ອງມາຈາກພະຍາດທີ່ເກີດຂຶ້ນກ່ອນການເຮັດປະກັນໄພ.

1.8 ″ພິການຖາວອນທັງໝົດ" ໝາຍເຖິງ: ພິການເຖິງຂະໜາດບໍ່ສາມາດປະກອບໜ້າທີ່ວຽກງານໃດໆໃນອາຊີບປະຈຳ ແລະອາຊີບອື່ນໆໄດ້ໂດຍສິ້ນເຊີງຕະຫຼອດໄປ.

1.9 ″ການສູນເສຍການເບິ່ງເຫັນ" ໝາຍເຖິງ: ຕາບອດສະນິດ ທີ່ບໍ່ສາມາດຈະປິ່ນປົວໃຫ້ດີໄດ້ ຕະຫຼອດໄປ.

1.10 ″ການສູນເສຍອະໄວຍະວະຢ່າງຖາວອນ" ໝາຍເຖິງ ການຖືກຕັດອອກຈາກຮ່າງກາຍຕັ້ງແຕ່ຂໍ້ມື ຫຼື ຂໍ້ຕີນ ແລະ ລວມເຖິງການສູນ ເສຍສະມັດຕະພາບໃນການໃຊ້ງານຂອງອະໄວຍະວະດັ່ງກ່າວໃນເບື້ອງຕົ້ນ ໂດຍມີການຢັ້ງຢືນທາງການແພດຢ່າງຊັດເຈນວ່າບໍ່ສາ ມາດກັບມາໃຊ້ງານໄດ້ອີກຕໍ່ໄປ.

1.11 ″ໄລຍະເວລາຂອງການຄຸ້ມກັນ" ໝາຍເຖິງ: ໄລຍະເວລານັບຕັ້ງແຕ່ວັນທີ ທີ່ມີຜົນບັງຄັບ ຫຼື ວັນເລີ້ມຄຸ້ມກັນ ຈົນເຖິງວັນສິ້ນສຸດຕາມທີ່ລະບຸໄວ້ໃນ ສັນຍາປະກັນໄພ.

1.12 ″ການເດີນທາງ" ໝາຍເຖິງ:

***<u>ສຳລັບຜູ້ທີ່ອາໃສຢູ່ໃນ ສປປ ລາວ</u>***

– ການເດີນທາງໄປ-ກັບ ທີ່ເກີດຂຶ້ນໃນລະຫວ່າງໄລຍະເວລາປະກັນໄພ, ເຊິ່ງຈະເລີ້ມຕົ້ນຂຶ້ນເມື່ອເດີນທາງອອກຈາກເຮືອນ ໃນ ສປປ ລາວ ຫຼື ເລີ້ມຈາກວັນທີ ທີ່ມີຜົນບັງຄັບໃຊ້ ສະແດງໄວ້ໃນສັນຍາປະກັນໄພ (ຈະເປັນວັນທີພາຍຫຼັງກໍ່ແລ້ວແຕ່) ແລະ ຈະສິ້ນສຸດລົງເມື່ອເດີນທາງກັບເຖິງ ເຮືອນ ໃນ ສປປ ລາວ ຫຼື ຈະສິ້ນສຸດລົງຕາມມື້ສິ້ນສຸດໄລຍະເວລາຂອງການປະກັນໄພ (ຈະເປັນວັນທີກ່ອນໜ້າກໍ່ແລ້ວແຕ່) ຫຼື ຈະສິ້ນສຸດກ່ອນມື້ສິ້ນສຸດໄລຍະປະກັນໄພ ໃນກໍລະນີ:

– ຜູ້ໄດ້ຮັບການປະກັນໄພຈຳເປັນຕ້ອງໄດ້ຮັບການປິ່ນປົວ ທີ່ຈຳເປັນຕ້ອງໄດ້ຖືກສົ່ງກັບເຖິງໂຮງໝໍ ຫລື ສະຖານທີ່ພັກຟື້ນໃນ ສປປ ລາວ ສຳລັບການເດີນທາງພາຍໃນ ສປປ ລາວ ຫຼື ສຳລັບການເດີນທາງໄປຕ່າງປະເທດ ແມ່ນໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພຈຳເປັນຕ້ອງໄດ້ຮັບການປິ່ນປົວ ທີ່ຈຳເປັນຕ້ອງໄດ້ຖືກສົ່ງກັບເຖິງໂຮງໝໍ ຫລື ສະຖານທີ່ພັກ ຟື້ນໃນ ສປປ ລາວ ຫຼື ປະເທດໄທ ຖ້າໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຢູ່ຕ່າງປະເທດ ແລະ ບໍ່ມີສິ່ງອຳນວຍຄວາມສະດວກທີ່ເໝາະສົມຢູ່ຕາມໂຮງໝໍ ຫຼື ສະຖານທີ່ພັກຟື້ນ ຢູ່ໃນ ສປປ ລາວ, ຫລື

– ກໍລະນີເດີນທາງໄປ ພຽງຢ່າງດຽວ ທີ່ເກີດຂຶ້ນໃນລະຫວ່າງໄລຍະເວລາປະກັນໄພ, ເຊິ່ງຈະເລີ່ມຕົ້ນຂຶ້ນເມື່ອເດີນທາງອອກຈາກເຮືອນ ໃນ ສປປ ລາວ ຫຼື ເລີ່ມຈາກວັນທີ ທີ່ມີຜົນບັງຄັບໃຊ້ ສະແດງໄວ້ໃນ ສັນຍາປະກັນໄພ (ຈະເປັນວັນທີພາຍຫຼັງກໍ່ແລ້ວແຕ່) ແລະ ຈະສິ້ນສຸດລົງຕາມມື້ສິ້ນສຸດໄລຍະເວລາ ຂອງການປະກັນໄພ, ຫລື ສິ້ນສຸດກ່ອນມື້ສິ້ນສຸດໄລຍະປະກັນໄພ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຈຳເປັນຕ້ອງໄດ້ ຮັບການປິ່ນປົວ ທີ່ຈຳເປັນຕ້ອງໄດ້ຖືກສົ່ງຕົວກັບເຮືອນ ຫລື ໂຮງໝໍ ຫລື ສະຖານທີ່ພັກຟື້ນໃນ ສປປ ລາວ ສຳລັບການເດີນທາງພາຍໃນ ສປປ ລາວ ຫຼື ສຳລັບການເດີນທາງໄປຕ່າງປະເທດ ແມ່ນໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຈຳເປັນຕ້ອງໄດ້ຖືກສົ່ງຕົວກັບເຮືອນ ຫລື ໂຮງໝໍ ຫລື ສະຖານທີ່ພັກຟື້ນໃນ ສປປ ລາວ, ຫຼື ຖືກສົ່ງຕົວໄປໂຮງໝໍ ຫລື ສະຖານທີ່ພັກຟື້ນໃນ ປະເທດໄທ ຖ້າໃນກໍລະນີທີ່ຜູ້ໄດ້ຮັບປະກັນໄພຢູ່ຕ່າງປະເທດ ແລະ ບໍ່ມີສິ່ງອຳນວຍຄວາມສະດວກທີ່ເໝາະສົມຢູ່ຕາມໂຮງໝໍ ຫຼື ສະຖານທີ່ພັກຟື້ນຢູ່ໃນ ສປປ ລາວ, ຈະເປັນກໍລະນີໃດເກີດຂຶ້ນກ່ອນກໍ່ແລ້ວແຕ່.

***<u>ສຳລັບຜູ້ທີ່ບໍ່ໄດ້ອາໃສຢູ່ໃນ ສປປ ລາວ:</u>***

– ການເດີນທາງມາທ່ອງທ່ຽວ ເຊິ່ງຈະເລີ່ມຕົ້ນຂຶ້ນເມື່ອຜູ້ໄດ້ຮັບການປະກັນໄພ ເດີນທາງເຂົ້າມາ ສປປ ລາວ (ໂດຍຜ່ານດ່ານກວດຄົນເຂົ້າ-ອອກເມືອງ ແລະ ໄດ້ຮັບອະນຸຍາດເຂົ້າເຂດແດນຂອງ ສປປ ລາວ ຢ່າງເປັນທາງການ) ແລະ ຈະສິ້ນສຸດລົງເມື່ອເດີນທາງອອກຈາກ ສປປ ລາວ (ໂດຍຜ່ານດ່ານກວດຄົນເຂົ້າ-ອອກເມືອງ ແລະ ໄດ້ແຈ້ງຂໍອະນຸຍາດອອກ ສປປ ລາວ ຢ່າງເປັນທາງການ)

1.13 "ຂອບເຂດການຄຸ້ມກັນ" ໝາຍເຖິງ ສະຖານທີ່, ບໍລິເວນອານາເຂດ ທີ່ໃຫ້ການຄຸ້ມກັນ ມີຜົນບັງຄັບໃຊ້ ຕາມທີ່ລະບຸໄວ້ໃນສັນຍາປະກັນໄພ.

1.14 "ຕ່າງປະເທດ" ໝາຍເຖິງ ບໍລິເວນອານາເຂດນອກປະເທດລາວ.

1.15 "ເຮືອນ, ສະຖານທີ່ພັກອາໃສຢູ່ຕາມປົກກະຕິ" ໝາຍເຖິງ ສະຖານທີ່ ທີ່ຜູ້ໄດ້ຮັບການປະກັນໄພພັກອາໃສຢູ່ຕາມປົກກະຕິ.

1.16 "ພີ່ນ້ອງໃກ້ຊິດ" ໝາຍເຖິງ ຄູ່ສົມລົດ, ບິດາ ແລະ ມານດາ, ບິດາ ແລະ ມານດາຂອງຄູ່ສົມລົດ, ລູກຕາມກົດໝາຍ, ອ້າຍ-ນ້ອງຮ່ວມບິດາ ຫຼື ມານດາ, ຜູ້ທີ່ເປັນຜູ້ດູແລຕາມກົດໝາຍ ແລະ ປູ່ຍ່າຕາຍາຍຂອງຜູ້ໄດ້ຮັບການປະກັນໄພ.

1.17 "ຜູ້ໃກ້ຊິດໃນການເຮັດທຸລະກິດ" ໝາຍເຖິງ: ບຸກຄົນທີ່ກ່ຽວຂ້ອງກັບ ຜູ້ໄດ້ຮັບການປະກັນໄພ ໃນການເຮັດທຸລະກິດນຳກັນ ແລະ ຕ້ອງຂາດການເຮັດທຸລະກິດໄປໃນເວລາດຽວກັນ ເປັນເວລາໜຶ່ງວັນ ຫຼື ຫຼາຍກ່ວານັ້ນ ເນື່ອງຈາກຈະຕ້ອງເດີນທາງກັບຄືນພູມລຳ ເນົາເນື່ອງຈາກການເສຍຊີວິດຂອງພີ່ນ້ອງໃກ້ຊິດ.

1.18 "ໂລກເອສ" ໝາຍເຖິງ ໂລກພູມຄຸ້ມກັນບົກຜ່ອງ ຊຶ່ງລວມເຖິງການຕິດເຊື້ອ ຫຼື ພະຍາດຕ່າງໆເມື່ອຮ່າງກາຍອ່ອນແອ, ເນື້ອງອກ, ອາການຕິດເຊື້ອ ເອສ ໄອ ວີ, ອາການສະໝອງເສື່ອມ, ສຸຂະພາບເສື່ອມໂຊມລົງ ເນື່ອງຈາກຕິດເຊື້ອ ເອສ ໄອ ວີ ຫຼື ການເຈັບປ່ວຍຕ່າງໆທີ່ເກີດຂຶ້ນເນື່ອງຈາກມີຜົນກວດ ເອສ ໄອ ວີ ເປັນບວກ.

1.19 "ບໍລິສັດ ອາລີອັນສ໌ ເວີລວາຍ ພາດເນີ (ປະເທດໄທ) ຈຳກັດ/ ບໍລິສັດທີ່ໄດ້ຮັບມອບອຳນາດ " ໝາຍເຖິງ: ນິຕິບຸກຄົນທີ່ໄດ້ຮັບມອບອຳ ນາດຈາກບໍລິສັດ ໃນການໃຫ້ບໍລິການໃຫ້ຄວາມຊ່ວຍເຫຼືອ ກໍລະນີສຸກເສີນແຕ່ພຽງຜູ້ດຽວ ແກ່ຜູ້ໄດ້ຮັບການປະກັນໄພ ຕາມທີ່ລະບຸ ໄວ້ໃນສັນຍາປະກັນໄພ.

1.20 "ສິ່ງຂອງທີ່ໃຊ້ໃນການເດີນທາງ" ໝາຍເຖິງ: ເສື້ອຜ້າ ແລະ ເຄື່ອງໃຊ້ສ່ວນຕົວຕ່າງໆ, ກະເປົາເດີນທາງ (ຫຼືສິ່ງຂອງທີ່ມີລັກສະນະຄ້າຍຄືກະເປົາ) ຊຶ່ງທ່ານໄດ້ນຳຕິດຕົວ ຫຼື ຊື້ໃນລະຫວ່າງການເດີນທາງ ເພື່ອໃຊ້ສ່ວນຕົວໃນລະຫວ່າງການເດີນທາງ ແລະ ໃຫ້ ລວມເຖິງສິ່ງຂອງມີຄ່າ, ຍົກເວັ້ນເງິນພົກຕິດຕົວ ແລະ ເອກະສານສ່ວນຕົວ.

1.21 "ເງິນຕິດຕົວ" ໝາຍເຖິງ: ເງິນຫຼຽນ, ທະນະບັດ, ເງິນສະກຸນຕ່າງໆ, ແຊັກເດີນທາງ, ປີ້ເດີນທາງ, ບັດທີ່ພັກໃນໂຮງແຮມ ແລະ ບັດວັນຢຸດພັກຜ່ອນ ຊຶ່ງສາມາດປ່ຽນເປັນເງິນສົດໄດ້ ຫຼື ອອກທົດແທນໃໝ່ໄດ້, ຄູປອງນ້ຳມັນ, ບັດໂທລະສັບ, ບັດເຄຼດິດ ແລະ ບັດແຖບແມ່ເຫຼັກຕ່າງໆ.

1.22 "ເອກະສານສ່ວນຕົວ" ໝາຍເຖິງ: ໜັງສືຜ່ານແດນ, ບັດປະຈຳຕົວ ແລະ ໃບອະນຸຍາດຂັບຂີ່ລົດ.

1.23 ″ສິ່ງຂອງມີຄ່າ" ໝາຍເຖິງ: ເຄື່ອງປະດັບອັນຍະມະນີ, ໂມງ, ສິ່ງຂອງທີ່ເຮັດມາຈາກວັດຖຸມີຄ່າ ຫຼື ຫີນມີຄ່າ, ຂົນສັດ, ເຄື່ອງໜັງ, ກ້ອງສ່ອງທາງໄກ, ກ້ອງຈຸລະທັດ, ເກມຄອມພິວເຕີ້ ແລະ ອຸປະກອນຖ່າຍຮູບ, ເຄື່ອງສຽງ, ວິດີໂອ, ຄອມພິວເຕີ້, ໂທລະທັດ, ເຄື່ອງແຟັກ, ໂທລະສັບ, ດາວທຽມພົກພາ, ອຸປະກອນດຳນ້ຳ, ຟິມ, ເທັບ, ກັບເທັບ, ເຄື່ອງຫຼິ້ນດິສ ແລະ ກັບຟິມ.

1.24 ″ຄູ່ ຫຼືຊຸດ" ໝາຍເຖິງ: ຈຳນວນຊິ້ນສ່ວນຂອງສິ່ງຂອງໃນການເດີນທາງ ຊຶ່ງຮວມກັນຢູ່ ຫຼື ສາມາດນຳໄປໃຊ້ຄູ່ກັນ.

1.25 ″ຈຳນວນເງິນຈຳກັດຄວາມຮັບຜິດຊອບຂອງສິ່ງຂອງແຕ່ລະອັນ" ໝາຍເຖິງ: ຈຳນວນເງິນປະກັນໄພສູງສຸດທີ່ບໍລິສັດຈະຈ່າຍໃຫ້ ສຳລັບສິ່ງຂອງແຕ່ລະອັນ ຫຼື ແຕ່ລະຄູ່ ຫຼື ແຕ່ລະຊຸດ.

1.26 ການເດີນທາງພາຍໃນ ໝາຍເຖິງ ການເດີນທາງພາຍໃນ ສປປລາວ

## 2. ເງື່ອນໄຂທົ່ວໄປ.

### 2.1 ຜູ້ໄດ້ຮັບການຄຸ້ມກັນ.

ສັນຍາປະກັນໄພສະບັບນີ້ ຈະໃຫ້ການຄຸ້ມກັນສະເພາະແຕ່ ຜູ້ໄດ້ຮັບການປະກັນໄພ ທີ່ມີຊື່ລະບຸໄວ້ໃນສັນຍາປະກັນໄພ ແລະ ຄຸ້ມ ກັນຕາມໄລຍະເວລາເອົາການປະກັນໄພທີ່ລະບຸໄວ້ໃນສັນຍາປະກັນໄພ.

### 2.2 ສັນຍາປະກັນໄພຈະໃຫ້ການຄຸ້ມກັນ:

2.2.1 ເມື່ອໄດ້ມີການຊຳລະຄ່າທຳນຽມປະກັນໄພຄົບຖ້ວນ ແລະ ບໍລິສັດໄດ້ຮັບຄ່າທຳນຽມແລ້ວ

2.2.2 ມີຜົນບັງຄັບໃຊ້ສະເພາະໃນໄລຍະເວລາການປະກັນໄພ ທີ່ລະບຸໄວ້ໃນສັນຍາປະກັນໄພ ເທົ່ານັ້ນ

2.2.3 ມີຜົນບັງຄັບໃຊ້ສະເພາະໃນຂອບເຂດການຄຸ້ມກັນ ທີ່ລະບຸໄວ້ໃນສັນຍາປະກັນໄພ ເທົ່ານັ້ນ

2.2.4 ການຄຸ້ມກັນສຳລັບການຍົກເລີກການເດີນທາງ ຕາມທີ່ລະບຸໄວ້ໃນຕາຕະລາງສະແດງຜົນປະໂຫຍດການຄຸ້ມກັນ ແລະ ບໍລິການນັ້ນ, ຈະໃຫ້ການຄຸ້ມກັນນັບຈາກວັນທີ ທີ່ໄດ້ລະບຸໄວ້ໃນ ສັນຍາປະກັນໄພ ແລະ ສິ້ນສຸດລົງ ເມື່ອເລີ້ມອອກເດີນທາງ, ໃນກໍລະນີ ວັນທີທີ່ລະບຸໄວ້ໃນສັນຍາປະກັນໄພນັ້ນ ເປັນວັນທີພາຍຫຼັງວັນທີທີ່ເດີນທາງ, ການຄຸ້ມກັນສຳລັບການຍົກເລີກການເດີນທາງນີ້ ຈະບໍ່ມີຜົນບັງຄັບໃນການຄຸ້ມກັນ.

2.2.5 ການຄຸ້ມກັນໃນສ່ວນອື່ນໆນັ້ນ ຈະເລີ້ມໃຫ້ການຄຸ້ມກັນເມື່ອ ຜູ້ໄດ້ຮັບການປະກັນໄພເລີ່ມອອກເດີນທາງ ແລະ ສິ້ນສຸດລົງເມື່ອການເດີນທາງນັ້ນສິ້ນສຸດລົງ ແຕ່ຢ່າງໃດກໍ່ຕາມໄລຍະເວລານັ້ນຈະຕ້ອງບໍ່ເກີນກ່ວາ ໄລຍະເວລາທີ່ລະບຸໄວ້ໃນສັນຍາປະກັນໄພ.

2.2.6 ໃນກໍລະນີເດີນທາງໄປຕ່າງປະເທດ ໄລຍະເວລາໃນການເດີນທາງເກີນ 90 ວັນ ຫຼື ວັນທີເດີນທາງກັບບໍ່ໄດ້ມີການການົດໄວ້ໃນສັນຍາປະກັນໄພ, ການຄຸ້ມ ກັນພາຍໃຕ້ສັນຍາປະກັນໄພນີ້ ຈະສິ້ນສຸດລົງໂດຍອັດຕະໂນມັດເມື່ອຄົບ 90 ວັນ ໂດຍນັບຈາກວັນທີ່ໄດ້ເລີ້ມອອກເດີນທາງ. ສຳລັບການເດີນທາງ FA Plan ແລະ Inbound Plan, ໃນກໍລະນີໄລຍະເວລາໃນການເດີນທາງເກີນ 30 ວັນ ຫຼື ວັນທີເດີນທາງກັບບໍ່ໄດ້ມີການກຳນົດໄວ້ໃນສັນຍາປະກັນໄພ, ການຄຸ້ມກັນພາຍໃຕ້ສັນຍາປະກັນໄພນີ້ ຈະສິ້ນສຸດລົງໂດຍອັດຕະໂນມັດເມື່ອຄົບ 30 ວັນ ໂດຍນັບຈາກວັນທີ່ໄດ້ເລີ້ມອອກເດີນທາງ

2.2.7 ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ, ຜູ້ທີ່ເດີນທາງຮ່ວມດ້ວຍບໍ່ສາມາດສິ້ນສຸດການເດີນທາງຕາມໄລຍະເວລາທີ່ກຳນົດໃນສັນຍາປະກັນໄພ ເນື່ອງຈາກເສຍຊີວິດ, ເຈັບປ່ວຍ, ໄດ້ຮັບບາດເຈັບ ຫຼື ຄວາມຫຼ້າຊ້າໃນການເດີນທາງເຊິ່ງຫຼີກລ້ຽງບໍ່ໄດ້ ເນື່ອງຈາກລະບົບການຂົນສົ່ງມວນຊົນ, ບໍລິສັດຈະຂະຫຍາຍໄລຍະການຄຸ້ມກັນໃຫ້ ໂດຍບໍ່ຄິດຄ່າທຳນຽມປະກັນໄພເພີ່ມຈົນກ່ວາຈະສິ້ນສຸດການເດີນທາງຢ່າງສົມເຫດສົມຜົນ.

**ສັນຍາປະກັນໄພນີ້ຈະໃຫ້ການຄຸ້ມກັນເມື່ອຜູ້ໄດ້ຮັບການປະກັນໄພຢູ່:**

2.2.8 ໃນຂອບເຂດການຄຸ້ມກັນ ຕາມທີ່ລະບຸໄວ້ໃນສັນຍາປະກັນໄພເທົ່ານັ້ນ

### 2.3 ການປ່ຽນແປງການຄຸ້ມກັນ.

ໃນກໍລະນີຜູ້ໄດ້ຮັບການປະກັນໄພຕ້ອງການປ່ຽນແປງການຄຸ້ມກັນ ຕ້ອງຕິດຕໍ່ຫາຕົວແທນຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ແລະ

- ແຈ້ງຊື່ຜູ້ສະເໜີເອົາການປະກັນໄພ, ຊື່ຜູ້ໄດ້ຮັບການປະກັນໄພ, ລະຫັດລູກຄ້າ ແລະ ເລກທະບຽນປະກັນໄພ ທີ່ລະບຸໄວ້ໃນສັນຍາປະກັນໄພ.
- ແຈ້ງການປ່ຽນແປງການຄຸ້ມກັນທີ່ຕ້ອງການ ໂດຍຈະ**ຕ້ອງແຈ້ງກ່ອນວັນເລີ້ມຕົ້ນອອກເດີນທາງ** ຊຶ່ງອາດຈະຕ້ອງມີການປ່ຽນແປງ ຄ່າທຳນຽມປະກັນໄພຕາມຄວາມເໝາະສົມ.

**2.4 ການຈຳກັດຄວາມຮັບຜິດຊອບ**

ເປັນທີ່ຕົກລົງ ແລະ ເຂົ້າໃຈກັນແລ້ວວ່າ: ໂຮງໝໍ, ສະຖານທີ່ບໍລິການທາງການແພດ, ແພດ ຫຼື ຜູ້ຊ່ວຍຊານ ແມ່ນຕ້ອງຈັດຫາໂດຍບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ແຕ່ບໍ່ແມ່ນພະນັກງານ ຫຼື ລູກຈ້າງຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດແຕ່ຢ່າງໃດ, ດັ່ງນັ້ນບໍລິສັດ ແລະ ບໍລິສັດທີ່ໄດ້ຮັບມອບອຳນາດຈະບໍ່ຮັບຜິດຊອບຕໍ່ຄວາມຜິດພາດ, ການກະທຳ ຫຼື ບໍ່ກະທຳຂອງບຸກຄົນ ຫຼື ອົງການດັ່ງກ່າວ.

**2.5 ການຮັບຊ້ວງສິດ**

ໂດຍຄ່າໃຊ້ຈ່າຍຂອງບໍລິສັດ ຜູ້ໄດ້ຮັບການປະກັນໄພຕ້ອງເຮັດທຸກຢ່າງເທົ່າທີ່ຈຳເປັນທີ່ບໍລິສັດຈະຮຽກຮ້ອງໃຫ້ເຮັດຕາມ ເພື່ອໃຫ້ບໍລິສັດໄດ້ຮັບຊ້ວງສິດທິຈາກຜູ້ໄດ້ຮັບການປະກັນໄພເພື່ອຮຽກຮ້ອງໃນນາມຜູ້ໄດ້ຮັບການປະກັນໄພເອົາຄ່າທົດແທນຄວາມເສຍຫາຍຈາກບຸກຄົນອື່ນ ບໍ່ວ່າການກະທຳດັ່ງກ່າວນັ້ນຈະເປັນເວລາກ່ອນ ຫຼື ຫຼັງການໄດ້ຮັບສິນທົດແທນຈາກບໍລິສັດກໍ່ຕາມ.

**2.6 ການສູນເສຍ ຫຼືຄວາມເສຍຫາຍສູງສຸດ.**

ບໍລິສັດຈະຮັບຜິດຊອບສູງສຸດບໍ່ເກີນ 1,000,000 ໂດລາ (ໜຶ່ງລ້ານ ໂດລາ) ຕໍ່ໜຶ່ງເຫດການ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພມີຫຼາຍກ່ວາ ໜຶ່ງຄົນ.

**2.7 ຂໍ້ສຳຄັນທີ່ຜູ້ໄດ້ຮັບການປະກັນໄພຄວນຮັບຮູ້ກ່ອນອອກເດີນທາງ**

- ຈະຕ້ອງບໍ່ເດີນທາງໂດຍການຝ່າຝືນຄຳແນະນຳຂອງແພດ
- ຈະຕ້ອງບໍ່ເດີນທາງໄປເພື່ອປິ່ນປົວພະຍາດຢູ່ຕ່າງປະເທດ
- ຈະຕ້ອງບໍ່ເດີນທາງເມື່ອແພດໄດ້ກວດພະຍາດ ແລະໄດ້ພົບວ່າ ເຈັບເປັນຢູ່ໃນຂັ້ນອັນຕະລາຍ.

## 3. ຂໍ້ຍົກເວັ້ນທົ່ວໄປ

ພາຍໃຕ້ສັນຍາປະກັນໄພນີ້ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ບໍ່ຄຸ້ມກັນ ການສູນເສຍ ຫຼື ຄວາມເສຍຫາຍ ຫຼື ຄວາມຮັບຜິດທາງກົງ ແລະ ທາງອ້ອມ ຊຶ່ງເກີດມາຈາກ ຫຼື ເນື່ອງມາຈາກ

**3.1 ການສູນເສຍ ຫຼືຄວາມເສຍຫາຍໃດໆ ທີ່ເກີດຂຶ້ນໃນເວລາຕໍ່ໄປນີ້:**

3.1.1 ໃນຂະນະທີ່ ຜູ້ໄດ້ຮັບການປະກັນໄພ ເດີນທາງໂດຍສາຍການບິນ ທີ່ບໍ່ໄດ້ຮັບ ໃບອະນຸຍາດໂດຍສານ ຢ່າງເປັນທາງການ.

3.1.2 ໃນຂະນະທີ່ ຜູ້ໄດ້ຮັບການປະກັນໄພ ກຳລັງປະຕິບັດໜ້າທີ່ເປັນພະນັກງານບັງຄັບການບິນ ຫຼືເປັນພະນັກງານບໍລິການ ເທິງ ສາຍການບິນ.

3.1.3 ໃນຂະນະທີ່ ຜູ້ໄດ້ຮັບການປະກັນໄພ ຕົກຢູ່ພາຍໃຕ້ລິດຂອງຢາເສບຕິດ, ສານລະລາຍ ຫຼື ຂອງມຶນເມົາ, ຍົກເວັ້ນ ຢາເສບຕິດທີ່ເບີກໃຫ້ໂດຍແພດ ຊຶ່ງໄດ້ຮັບໃບອະນຸຍາດປະກອບວິຊາຊີບ ແຕ່ຕ້ອງບໍ່ແມ່ນຢາເສບຕິດ ທີ່ໃຊ້ໃນການຮັກສາ ອາການຕິດຢາເສບຕິດ.

3.1.4 ໃນຂະນະທີ່ ຜູ້ໄດ້ຮັບການປະກັນໄພເດີນທາງ ເຊິ່ງເປັນສາເຫດທີ່ພາໃຫ້ເກີດຄວາມເສຍຫາຍລະຫວ່າງປະເທດ.

3.1.5 ໃນຂະນະທີ່ ຜູ້ໄດ້ຮັບການປະກັນໄພ ບໍ່ປະຕິບັດຕາມຂໍ້ບັງຄັບ, ຄຳສັ່ງ ຫຼື ຄຳແນະນຳ ຂອງລັດຖະບານ ຫຼື ໜ່ວຍງານຂອງລັດຖະບານ.

3.1.6 ຜູ້ໄດ້ຮັບການປະກັນໄພເຈັບເປັນ ແລະ ຮູ້ຢູ່ແລ້ວກ່ອນການເດີນທາງ, ຍົກເວັ້ນແຕ່ໄດ້ແຈ້ງໃຫ້ບໍລິສັດຮັບຮູ້ ເຖິງການເຈັບ ເປັນຂອງທ່ານ ແລະ ໄດ້ມີການຕົກລົງເຖິງເງື່ອນໄຂຂອງການຄຸ້ມກັນເປັນລາຍລັກອັກສອນ.

3.1.7 ການຮຽກຮ້ອງສິນທົດແທນທີ່ເກີດຂຶ້ນໂດຍກົງ ຫຼື ໂດຍທາງອ້ອມ ຫຼື ເປັນຜົນມາຈາກໂລກຕິດຕໍ່ທາງເພດສຳພັນ, ໂລກພູມ ຄຸ້ມກັນບົກຜ່ອງ (ເອສ ໄອ ວີ) ຫລື ໂລກເອດ ໃດໆກໍ່ຕາມ.

3.1.8 ການເດີນທາງທີ່ຜູ້ໄດ້ຮັບການປະກັນໄພບໍ່ໄດ້ນຳໃຊ້ການບໍລິການໃດໆຂອງບໍລິສັດທ່ອງທ່ຽວ (ບໍລິສັດທ່ອງທ່ຽວ ຫຼື ບໍລິສັດນຳທ່ຽວ) ຫຼື ບໍລິສັດຂົນສົ່ງມວນຊົນ

**3.2 ການສູນເສຍ ຫຼື ຄວາມເສຍຫາຍໃດໆ ທີ່ເກີດມາຈາກ ຫຼື ສືບເນື່ອງມາຈາກສາເຫດ ດັ່ງຕໍ່ໄປນີ້:**

3.2.1 ການຂ້າໂຕຕາຍ, ການຕັ້ງໃຈທຳຮ້າຍຕົນເອງ ຫຼື ການຕັ້ງໃຈທີ່ຈະຕົກຢູ່ໃນການສ່ຽງໄພອັນຕະລາຍ (ຍົກເວັ້ນໃນກໍລະນີທີ່ທ່ານພະຍາຍາມຊ່ວຍເຫຼືອຄົນອື່ນ)

3.2.2 ສົງຄາມ, ການກໍ່ການຮ້າຍ, ການລຸກຮື້ຂຶ້ນຂອງປະຊາຊົນ, ການນັດຢຸດງານ, ການປິດໂຮງງານເພື່ອນັດຢຸດງານ, ການປະຕິວັດ, ການກະທຳຂອງຜູ້ກໍ່ການຮ້າຍ, ການຈີ້ເຄື່ອງບິນ, ເຖິງແນວໃດກໍ່ຕາມ ບໍລິສັດຈະໃຫ້ການຄຸ້ມກັນສຳລັບການໃຫ້ຄວາມຊ່ວຍເຫຼືອ ເປັນ

ເວລາ 14 ວັນ ເລີ້ມຕັ້ງແຕ່ວັນດັ່ງກ່າວມານັ້ນໄດ້ເລີ້ມຕົ້ນຂຶ້ນ, ແຕ່ສະເພາະໃນກໍລະນີເຫດການດັ່ງກ່າວມານັ້ນ ໄດ້ເລີ້ມຂື້ນ ເມື່ອຜູ້ໄດ້ຮັບການປະກັນໄພຢູ່ຕ່າງປະເທດແລ້ວ.

3.2.3 ການລົ້ມລະລາຍ ຫຼື ການປິດຂອງບໍລິສັດທີ່ເປັນຜູ້ຂາຍປີ້ໃນການເດີນທາງ ຫຼື ບ່ອນພັກ, ຕົວແທນບໍລິການ ການເດີນທາງ ຫຼື ບຸກຄົນທີ່ເຮັດໜ້າທີ່ຕ່າງໆແທນ ຜູ້ໄດ້ຮັບການປະກັນໄພ.

3.2.4 ການແຜ່ລັງສີ ຫຼື ການປົນເປື້ອນຂອງເຊື້ອວັດຖຸນິວເຄຼຍ ຫຼື ກາກນິວເຄຼຍ ຫຼື ການສ່ຽງໄພ ຕ່າງໆທີ່ກ່ຽວຂ້ອງກັບອຸປະກອນນິວເຄຼຍ

3.2.5 ໃນກໍລະນີຜູ້ໄດ້ຮັບການປະກັນໄພ ເຂົ້າໄປມີສ່ວນກ່ຽວຂ້ອງໃນກິດຈະກຳດັ່ງນີ້

- ການຝຶກອົບຮົມທີ່ຢູ່ພາຍໃຕ້ການເບິ່ງແຍງຂອງໜ່ວຍງານທະຫານ.
- ການຫຼີ້ນກິລາປະເພດຕ່າງໆ ທີ່ຖືວ່າເປັນອາຊີບ ຫຼື ໄດ້ຮັບຄ່າຕອບແທນ

– ການເຂົ້າຮ່ວມການແຂ່ງຂັນກິລາ ແລະ ການຝຶກຊ້ອມກິລາ, ການຫຼີ້ນກິລາສະມັກຫຼິ້ນ ແລະ ບໍ່ວ່າລະດັບໃດກໍ່ຕາມ ສໍາລັບ ກິລາທີ່ກ່ຽວຂ້ອງກັບເຄື່ອງຈັກ (ລົດໃຫ່ຍ, ລົດຈັກ ແລະພາຫະນະທີ່ແລ່ນດ້ວຍເຄື່ອງຈັກຕ່າງໆ) ກິລາທາງອາກາດ, ການດໍາ ນໍ້າໂດຍໃຊ້ຖັງອົອກຊີເຈນ ແລະ ເຄື່ອງມືຊ່ວຍຫາຍໃຈ.

## 4. ການຄຸ້ມກັນ

### 4.1 ອຸປະຕິເຫດສ່ວນບຸກຄົນ

ປະກັນໄພນີ້ໃຫ້ການຄຸ້ມກັນ ການສູນເສຍ ຫຼື ຄວາມເສຍຫາຍທີ່ມີສາເຫດມາຈາກ ການບາດເຈັບທາງຮ່າງກາຍຂອງຜູ້ໄດ້ຮັບ ການປະກັນໄພ ໂດຍອຸປະຕິເຫດເທົ່ານັ້ນ ແລະເກີດຂຶ້ນພາຍໃນໄລຍະເວລາເອົາປະກັນໄພ ເຊິ່ງພາໃຫ້ເກີດຜົນດັ່ງຕໍ່ໄປນີ້ :

**ການເສຍຊີວິດ, ການສູນເສຍອະໄວຍະວະ ສາຍຕາ ຫຼືພິການຖາວອນຢ່າງສິ້ນເຊີງ**

ຖ້າຫາກວ່າການບາດເຈັບທີ່ເຮັດໃຫ້ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ສູນເສຍອະໄວຍະວະສາຍຕາ ຫຼື ພິການຖາວອນທັງໝົດ ພາຍໃນ 180 ວັນ ນັບແຕ່ວັນທີ່ໄດ້ເກີດອຸປະຕິເຫດ ຫຼື ການບາດເຈັບ ທີ່ເຮັດໃຫ້ຜູ້ໄດ້ຮັບການປະກັນໄພຕ້ອງໄດ້ຮັບການປິ່ນປົວຕິດຕໍ່ກັນໃນຖານະຄົນເຈັບໃນໂຮງໝໍ ຫຼື ສະຖານໃຫ້ບໍລິການທາງການແພດໃນທ້ອງຖິ່ນ ແລະ ເສຍຊີວິດຍ້ອນການບາດເຈັບນັ້ນເມື່ອໃດກໍ່ຕາມ ບໍລິສັດຈະຈ່າຍສິນທົດແທນດັ່ງນີ້:

- 100% ຂອງວົງເງິນຄຸ້ມກັນ ສາລັບການເສຍຊີວິດ.

– 100% ຂອງວົງເງິນຄຸ້ມກັນ ສາລັບການພິການຖາວອນ ແລະ ການພິການຖາວອນນັ້ນໄດ້ເປັນໄປຕິດຕໍ່ກັນ ຢ່າງໜ້ອຍ 12 ເດືອນ ນັບຕັ້ງແຕ່ມື້ທີ່ເກີດອຸປະຕິເຫດ ຫຼື ມີການຊີ້ແຈງທາງການແພດຊັດເຈນແລ້ວວ່າ ຜູ້ໄດ້ຮັບການປະກັນໄພເປັນບຸກຄົນ ທີ່ຖືວ່າພິການຖາວອນ.

- 100% ຂອງວົງເງິນຄຸ້ມກັນ ສາລັບມືສອງເບື້ອງ ນັບຕັ້ງແຕ່ຂໍ້ມື ຫຼື ຕີນສອງເບື້ອງ ຫຼື ສາຍຕາທັງສອງເບື້ອງ.
- 100% ຂອງວົງເງິນຄຸ້ມກັນ ສາລັບມືໜຶ່ງເບື້ອງນັບຕັ້ງແຕ່ຂໍ້ມື ແລະ ຕີນໜຶ່ງເບື້ອງນັບຕັ້ງແຕ່ຂໍ້ຕີນ
- 100% ຂອງວົງເງິນຄຸ້ມກັນ ສາລັບມືໜຶ່ງເບື້ອງນັບຕັ້ງແຕ່ຂໍ້ມື ແລະ ສາຍຕາໜຶ່ງເບື້ອງ
- 100% ຂອງວົງເງິນຄຸ້ມກັນ ສາລັບຕີນໜຶ່ງເບື້ອງນັບຕັ້ງແຕ່ຂໍ້ຕີນ ແລະ ສາຍຕາໜຶ່ງເບື້ອງ
- 60% ຂອງວົງເງິນຄຸ້ມກັນ ສາລັບມືໜຶ່ງເບື້ອງນັບຕັ້ງແຕ່ຂໍ້ມື
- 60% ຂອງວົງເງິນຄຸ້ມກັນ ສາລັບຕີນໜຶ່ງເບື້ອງນັບຕັ້ງແຕ່ຂໍ້ຕີນ
- 60% ຂອງວົງເງິນຄຸ້ມກັນ ສາຍຕາໜຶ່ງເບື້ອງ

ຂໍ້ຍົກເວັ້ນ

ກ. ການຂັບຂີ່ ຫຼືໂດຍສານລົດຈັກ

ຂ. ການປີນໜ້າຜາ, ການປີນຫຼືໄຕ່ພູ, ການແຂ່ງຂັນເລື່ອນຫິມະ, ການດໍານໍ້າໂດຍໃຊ້ ຫຼືບໍ່ໃຊ້ອຸປະກອນ ຊ່ວຍຫາຍໃຈ, ການໂດດຈ້ອງ.

ຄ. ຫົວໃຈວາຍ

ງ. ການເປັນອໍາມະພາດ, ຫູໜວກ, ຕາບອດ, ໂລກລົມບ້າໝູ ເຊິ່ງທ່ານໄດ້ຮັບຮູ້ ກ່ອນການເຮັດປະ ກັນໄພ

ຈ. ຜົນປະໂຫຍດຕ່າງໆທີ່ ບປລ ຈະຕ້ອງຈ່າຍ ໃນກໍລະນີທີ່ພົບວ່າ ຜູ້ໄດ້ຮັບຜົນປະໂຫຍດ ຂອງຜູ້ໄດ້ຮັບການປະກັນໄພ ມີຄວາມຜິດໃນຂໍ້ຫາຕັ້ງໃຈ ຄາດຕະກຳ ແລະຖືກຕັດສິນລົງໂທດ ເນື່ອງຈາກສາເຫດດັ່ງກ່າວ.

ການສົ່ງຫຼັກຖານການເສຍຫາຍ

1. ໃບຢັ້ງຢືນແພດທີ່ໄດ້ຮັບການປິ່ນປົວເບື້ອງຕົ້ນ ຊຶ່ງມີການລະບຸເຖິງ ລັກສະນະຂອງການເກີດອຸປະຕິເຫດ ແລະ ການເຈັບ ເປັນທີ່ເກີດຂຶ້ນ.

2. ໃບລາຍງານທີ່ອະທິບາຍເຖິງການເກີດອຸປະຕິເຫດ ແລະ ລັກສະນະຂອງການເກີດອຸປະຕິເຫດຢ່າງລະອຽດ.

3. ແຈ້ງໃຫ້ບໍລິສັດ ຫຼື ຕົວແທນຂອງບໍລິສັດຮັບຮູ້ເຖິງ ການຄຸ້ມກັນທີ່ຈະໄດ້ຮັບ ພາຍໃຕ້ການປະກັນໄພປະເພດດຽວກັນ ຈາກບໍລິສັດປະກັນໄພອື່ນ.

## 4.2 ການຊ່ວຍເຫຼືອທາງການແພດ, ຄ່າປິ່ນປົວ, ການສົ່ງຕົວກັບປະເທດ ແລະ ຄ່າໃຊ້ຈ່າຍ ແລະ ການບໍລິການຕ່າງໆ.

ຜູ້ໄດ້ຮັບການປະກັນໄພຕ້ອງຍອມຮັບໃຫ້ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ເປັນຜູ້ຕັດສິນໃຈ ແລະ ໃຊ້ທຸກວິທີ ຕາມຄວາມຈຳເປັນ ແລະ ເໝາະສົມ.

4.2.1 ການໃຫ້ຄວາມຊ່ວຍເຫຼືອທາງການແພດຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ໃນການສົ່ງຕົວກັບປະເທດ ເພື່ອການປິ່ນປົວຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ.

– ການຕັດສິນໃຈຕ່າງໆ ຈະເຮັດໃຫ້ດີທີ່ສຸດ ເພື່ອຜົນປະໂຫຍດໃນການປິ່ນປົວຂອງຜູ້ໄດ້ຮັບການປະກັນໄພ.

– ແພດຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ຈະຕິດຕໍ່ສະຖານໃຫ້ບໍລິການທາງການແພດໃນທ້ອງຖິ່ນ ຫຼື ຖ້າມີຄວາມຈຳເປັນອາດຈະຕ້ອງຕິດຕໍ່ແພດທີ່ປິ່ນປົວຜູ້ໄດ້ຮັບການປະກັນໄພຢູ່ເປັນປະຈຳ ເພື່ອຂໍຂໍ້ມູນທີ່ຈະນຳມາໃຊ້ໃນການຕັດສິນໃຈ ເພື່ອເປັນການເໝາະສົມກັບສະພາບຮ່າງກາຍຫຼາຍທີ່ສຸດ.

– ຜູ້ໄດ້ຮັບການປະກັນໄພຍອມຮັບວ່າ ແພດຜູ້ມີຄຸນະວຸດທິໃນປະເທດນັ້ນໆ ຈະເປັນຜູ້ຕັດສິນໃຈໃນການສົ່ງຕົວຜູ້ໄດ້ຮັບການປະກັນໄພກັບປະເທດ.

ຂໍ້ຈຳກັດ

1. ໃນກໍລະນີຜູ້ໄດ້ຮັບການປະກັນໄພປະຕິເສດ ທີ່ຈະປະຕິບັດຕາມການຕັດສິນໃຈຂອງແຜນທາງການແພດຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ຈະຖືວ່າຜູ້ໄດ້ຮັບການປະກັນໄພໄດ້ປະຕິເສດຄວາມຮັບຜິດຊອບຂອງບໍລິສັດ ແລະ ບໍລິສັດທີ່ໄດ້ຮັບມອບອຳນາດກ່ຽວກັບຜົນທີ່ອາດຈະເກີດຂຶ້ນຕາມມາຈາກການກະທຳຂອງຜູ້ໄດ້ຮັບການປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພຈະສູນເສຍສິດດັ່ງຕໍ່ໄປນີ້:

  – ສິດໃນການໄດ້ຮັບບໍລິການຈາກບໍລິສັດທີ່ໄດ້ຮັບມອບອຳນາດ ແລະ ສິດໃນການຊົດໃຊ້ຄ່າເສຍຫາຍຕ່າງໆ.

– ສິດໃນການໄດ້ຮັບບໍລິການຈາກບໍລິສັດ ແລະ ສິດໃນການຊົດໃຊ້ຄ່າເສຍຫາຍຕ່າງໆ.

2. ບໍ່ວ່າໃນກໍລະນີໃດກໍ່ຕາມ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ຈະບໍ່ສາມາດດຳເນີນການແທນໜ່ວຍງານທີ່ໃຫ້ການປິ່ນປົວເບື້ອງຕົ້ນໃນທ້ອງຖິ່ນ ຫຼື ຮັບຜິດຊອບໃນຄ່າໃຊ້ຈ່າຍທີ່ເກີດຂຶ້ນ.

### ຂໍ້ຍົກເວັ້ນ (ລວມທັງຄ່າປິ່ນປົວ)

ກ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນໂດຍບໍ່ໄດ້ຮັບອະນຸຍາດຈາກບໍລິສັດ.

ຂ. ການເຈັບເປັນທີ່ເກີດຂຶ້ນມາກ່ອນແລ້ວ ຊຶ່ງໄດ້ກວດພົບ ແລະ/ຫຼື ກຳລັງໄດ້ຮັບການປິ່ນປົວຢູ່ ເປັນສາເຫດໃຫ້ໄດ້ເຂົ້າຮັບການປິ່ນປົວຢູ່ໂຮງໝໍ.

ຄ. ການພັກຟື້ນ ແລະ ພະຍາດທີ່ກຳລັງເປັນຢູ່

ງ. ການຖືພາ ແລະ ພະຍາດແຊກຊ້ອນທີ່ອາດຈະເກີດຂຶ້ນໃນໄລຍະຖືພາເກີນ 06ເດືອນ

ຈ. ການຂູດມົດລູກ, ການຫຼູລູກ, ການອອກລູກ, ການປະສົມທຽມ ໄອ ວີ ເອຟ ແລະ ຜົນທີ່ອາດຈະເກີດຂຶ້ນຕາມມາ.

ສ. ການເດີນທາງເພື່ອຈຸດປະສົງໃນການກວດສຸຂະພາບ ແລະ/ຫຼື ການປິ່ນປົວພະຍາດ.

ຊ. ຄ່າອາຫານ, ຄ່າໃຊ້ຈ່າຍ ທີ່ບໍ່ໄດ້ລະບຸໄວ້ວ່າສາມາດທວງຄືນໄດ້ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນໂດຍບໍ່ມີໃບຮັບເງິນ.

ຍ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຄວບຄຸມ ກັກໄວ້ເພື່ອປ້ອງກັນການແຜ່ລະບາດຂອງເຊື້ອພະຍາດ.

ດ. ຄ່າໃຊ້ຈ່າຍທີ່ກ່ຽວກັບໂລກລະບາດຕ່າງໆ.

ຕ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນຢູ່ໃນ ສປປ ລາວ, ນອກຈາກວ່າ ຄ່າໃຊ້ຈ່າຍດັ່ງກ່າວກ່ຽວຂ້ອງກັບການປິ່ນປົວ ເຊິ່ງເປັນຜົນມາຈາກ ການເກີດອຸປະຕິເຫດ ຢູ່ໃນ ສປປ ລາວ.

4.2.2 ຜູ້ໄດ້ຮັບການປະກັນໄພ ຈະໄດ້ຮັບການຄຸ້ມຄອງ (ສໍາລັບການປິ່ນປົວ ແລະ ການຊ່ວຍເຫຼືອ) ໃນກໍລະນີ ຖ້າ:

ຜູ້ໄດ້ຮັບການປະກັນໄພໄດ້ຮັບບາດເຈັບຈາກອຸປະຕິເຫດ ຫຼື ເຈັບເປັນ ໃນເວລາເດີນທາງຢູ່ຕ່າງປະເທດ ຫຼື

ຜູ້ໄດ້ຮັບການປະກັນໄພໄດ້ຮັບບາດເຈັບຈາກອຸປະຕິເຫດ ໃນເວລາເດີນທາງຢູ່ ໃນປະເທດລາວ ໃນໄລຍະເດີນທາງຕັ້ງແຕ່ບ່ອນອາໃສ ຫາສະໜາມບິນ ເພື່ອເດີນທາງໄປຕ່າງປະເທດ ຫຼື ກັບມາຈາກຕ່າງປະເທດ ແຕ່ສະໜາມບິນ ຫາບ່ອນອາໃສ ໃນປະເທດລາວ ຫຼື ຖ້າ

ຜູ້ໄດ້ຮັບການປະກັນໄພໄດ້ຮັບບາດເຈັບຈາກອຸປະຕິເຫດ ໃນເວລາເດີນທາງຢູ່ພາຍໃນປະເທດລາວ ສໍາລັບການເດີນທາງພາຍໃນປະເທດ

4.2.2.1 ການຊ່ວຍເຫລືອທາງດ້ານການແພດ ແລະ ການສົ່ງຕົວກັບປະເທດ

ບໍລິສັດຈະຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຖືກສົ່ງກັບມາບ່ອນອາໃສຕາມປົກກະ ຕິໃນປະເທດລາວ ຫຼື ສົ່ງໄປຫາໂຮງໝໍທີ່ໃກ້ທີ່ສຸດກັບບ່ອນອາໃສ ຂອງຜູ້ໄດ້ຮັບການປະກັນໄພ. ໃນກໍລະນີຜູ້ໄດ້ຮັບການປະກັນໄພ ຈະຕ້ອງໄດ້ເຂົ້າຮັບການປິ່ນປົວໃນໂຮງໝໍຢູ່ຕ່າງປະເທດ, ເມື່ອຜູ້ໄດ້ຮັບການປະກັນໄພຮ້ອງຂໍ ແລະ ສະພາບຮ່າງກາຍຂອງຜູ້ໄດ້ຮັບການປະກັນໄພພາໃຫ້ມີການເຄື່ອນຍ້າຍ, ບໍລິສັດຈະຈັດໃຫ້ມີການສົ່ງຕົວກັບສູ່ບ່ອນອາໃສ ຕາມປົກກະຕິ ຂອງຜູ້ໄດ້ຮັບການປະກັນໄພໃນປະເທດລາວ

4.2.2.2 ຄ່າພາຫະນະໃນການເດີນທາງເພີ້ມເຕີມ.

ບໍລິສັດຈະຈ່າຍສໍາລັບຄ່າພາຫະນະໃນການເດີນທາງເພີ້ມເຕີມ ສໍາລັບພີ່ນ້ອງຂອງຜູ້ໄດ້ຮັບການປະກັນໄພໜຶ່ງທ່ານ ຫຼື ຜູ້ທີ່ຮ່ວມເດີນທາງມານໍາ, ໃນກໍລະນີທີ່ບຸກຄົນນັ້ນ ບໍ່ສາມາດເດີນທາງກັບປະເທດລາວ ໂດຍພາຫະນະທີ່ໄດ້ຈັດໄວ້ຕາມແຜນການເດີນ ທາງເກົ່າເນື່ອງຈາກການຖືກສົ່ງຕົວກັບຄືນປະເທດລາວຂອງຜູ້ໄດ້ຮັບການປະກັນໄພ.

4.2.2.3 ຄ່າປິ່ນປົວ

ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຕິດຕໍ່ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດທັນທີ ໃນກໍລະນີທີ່ຕ້ອງໄດ້ຮັບການປິ່ນປົວ ຫຼື ເຂົ້າຮັບການປິ່ນປົວໃນໂຮງໝໍ ໂດຍແພດໃນຕ່າງປະເທດ, ບໍລິສັດຈະຈ່າຍເປັນຈໍານວນເງິນສູງສຸດບໍ່ເກີນ ຈໍານວນເງິນທີ່ໄດ້ລະບຸໄວ້ໃນສັນຍາປະກັນໄພ ສໍາລັບ:

- ຄ່າໃຊ້ຈ່າຍຕາມຄວາມຈໍາເປັນໃນການປິ່ນປົວສຸກເສີນ ຊຶ່ງແພດເປັນຜູ້ສັ່ງ, ຄ່າໃຊ້ຈ່າຍໃນໂຮງໝໍໃນການພັກຟື້ນ ແລະ ການປິ່ນປົວ.
- ຄ່າໃຊ້ຈ່າຍໃນການປົວແຂ້ວສຸກເສີນ ເນື່ອງຈາກການບາດເຈັບຈາກອຸປະຕິເຫດ.

ສໍາລັບການເດີນທາງພາຍໃນ ສປປ ລາວ : ຄ່າໃຊ້ຈ່າຍໃນການປິ່ນປົວສຸກເສີນ ເນື່ອງຈາກອຸປະຕິເຫດ ເຊິ່ງຈະໄດ້ຮັບການຄຸ້ມ ກັນຈົນກ່ວາຜູ້ໄດ້ຮັບການປະກັນໄພມີສຸຂະພາບແຂງແຮງພ້ອມທີ່ຈະເດີນທາງ ແລະ ຖືກສົ່ງຕົວກັບເຮືອນ ຫລື ໂຮງໝໍ ຫລື ສະຖານພັກຟື້ນ ທີ່ຢູ່ໃກ້ເຮືອນທີ່ສຸດ ແລະ ຫລັງຈາກນັ້ນການຄຸ້ມກັນ ຂໍ້ 4.2 ກໍ່ຈະສິ້ນສຸດລົງ. ສາລັບການເດີນທາງພາຍໃນ, ການສົ່ງຕົວກັບ ແມ່ນສະເພາະພາຍໃນ ສປປ ລາວ ເທົ່ານັ້ນ

ສໍາລັບການເດີນທາງຢູ່ຕ່າງປະເທດ: ຄ່າໃຊ້ຈ່າຍໃນການປິ່ນປົວສຸກເສີນຢູ່ຕ່າງປະເທດ ແລະ ການຕິດຕາມການປິ່ນປົວຢູ່ຕ່າງປະເທດ ເນື່ອງຈາກອຸປະຕິເຫດ ຫຼື ການເຈັບປ່ວຍ ເຊິ່ງຈະໄດ້ຮັບການຄຸ້ມກັນຈົນກ່ວາຜູ້ໄດ້ຮັບການປະກັນໄພມີສຸຂະພາບແຂງແຮງພ້ອມທີ່ຈະເດີນທາງກັບ ປະເທດໄທ ຫລື ສປປ ລາວ ແລະ ຫລັງຈາກນັ້ນການຄຸ້ມກັນ ຂໍ້ 4.2 ກໍ່ຈະສິ້ນສຸດລົງ.

ສິດທີ່ຜູ້ໄດ້ຮັບການປະກັນໄພຈະໄດ້ຮັບພາຍໃຕ້ການຄຸ້ມກັນຂອງສັນຍາປະກັນໄພນີ້ ຈະສິ້ນສຸດລົງ ໃນວັນ ທີ່ແຜນການທາງການແພດໄດ້ຕັດສິນໃຈໃຫ້ສົ່ງຕົວຜູ້ໄດ້ຮັບການປະກັນໄພກັບເຮືອນ ຫລື ໂຮງໝໍທີ່ຢູ່ໃກ້ທີ່ສຸດ ໃນ ສປປ ລາວ ຫຼື ປະເທດໄທ.

**ຂໍ້ຍົກເວັ້ນສໍາລັບຄ່າປິ່ນປົວ.**

ກ. ຄ່າໃຊ້ຈ່າຍໃນການປິ່ນປົວພະຍາດດ້ວຍສະປາ, ການປິ່ນປົວດ້ວຍແສງອາທິດ, ການຫູດນໍ້າໜັກ.

ຂ. ການຮັກສາທີ່ບໍ່ສາມາດພິສູດໄດ້ວ່າເພື່ອຜົນປະໂຫຍດທາງການແພດ ຫຼື ການເຮັດກາຍະບໍາບັດ.

ຄ. ຄ່າໃຊ້ຈ່າຍໃນການປ່ຽນຖ່າຍອະໄວຍະວະ, ການເຮັດອະໄວຍະວະທຽມ, ອຸປະກອນແລະຄ່າໃຊ້ຈ່າຍກ່ຽວກັບການເບິ່ງເຫັນ.

ງ. ຄ່າໃຊ້ຈ່າຍໃນການສັກຢາວັກແຊັງ.

ຈ. ຄ່າໃຊ້ຈ່າຍສໍາລັບຢາທີ່ໃຊ້ໃນການປ້ອງກັນພະຍາດຕ່າງໆ.

ສ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນປະເທດລາວ, ນອກຈາກວ່າ ເປັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບຄ່າປິ່ນປົວເນື່ອງມາຈາກອຸປະຕິເຫດ ທີ່ເກີດຂຶ້ນ ຢູ່ໃນ ສປປ ລາວ.

ຊ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນປະເທດໄທ, ນອກຈາກວ່າ ເຫດການທີ່ເກີດຂຶ້ນນັ້ນ ສາມາດຮຽກຮ້ອງເອົາຄ່າປິ່ນປົວ ທີ່ເກີດຂຶ້ນໃນປະເທດໄທໄດ້

ຍ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຄຸມກໍາເນີດ, ການເອົາລູກອອກ, ການເກີດລູກ ແລະ ຜົນທີ່ອາດຈະເກີດຂຶ້ນພາຍຫຼັງ.

ດ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງ ຈາກຜົນກະທົບ ຫຼື ການແຊກຊ້ອນຂອງອາການເຈັບເປັນ ຫຼື ອຸປະຕິເຫດທີ່ເກີດຂຶ້ນກ່ອນການອອກເດີນທາງທີ່ໄດ້ເຮັດປະກັນໄພໄວ້.

ຕ. ການບົວລະບັດ ຫຼື ການປິ່ນປົວ ຊຶ່ງບໍ່ໄດ້ເກີດຈາກເຫດການສຸກເສີນທາງການແພດ.

ຖ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກການປິ່ນປົວ ຊຶ່ງຜົນວິເຄາະພະຍາດ ຫຼື ສາເຫດຂອງການປິ່ນປົວນັ້ນ ເກີດຂຶ້ນຈາກການເຈັບປ່ວຍທາງຈິດ ແລະ ລວມເຖິງຄວາມຜິດປົກກະຕິທາງອາລົມ ແຕ່ບໍ່ຈໍາກັດສະເພາະອາການເປັນບ້າເສຍຈິດ.

ທ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນເພື່ອການປະສົມທຽມ ຫຼື ການຮັກສາການມີລູກຍາກ.

ນ. ການບົວລະບັດ ຫຼື ການປິ່ນປົວທີ່ເຮັດໂດຍສະມາຊິກໃນຄອບຄົວ.

ບ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຄວບຄຸມ ກັກໄວ້ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ.

ປ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບໂລກລະບາດຕ່າງໆ.

4.2.3 ການຊ່ວຍເຫຼືອຂອງບໍລິສັດໃນກໍລະນີເສຍຊີວິດ.

ໃນກໍລະນີ ຜູ້ໄດ້ຮັບການປະກັນໄພເສຍຊີວິດ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດ ຈະດໍາເນີນການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍດັ່ງຕໍ່ໄປນີ້:

- ການສົ່ງສົບຈາກສະຖານທີ່ ທີ່ໄດ້ບັນຈຸສົບໃນໂລງສົບໄປຫາສະຖານທີ່ ທີ່ຈະເຮັດພິທີສົ່ງສະການໃນປະເທດລາວ.
- ຄ່າໃຊ້ຈ່າຍໃນການເຮັດພິທີສົບ.
- ຄ່າພາຫະນະໃນການເດີນທາງ ສໍາລັບບຸກຄົນໃນຄອບຄົວຂອງຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໃກ້ສິດໃນການເຮັດທຸລະກິດ ຈໍານວນໜຶ່ງທ່ານ ຊຶ່ງເດີນທາງຮ່ວມກັບຜູ້ໄດ້ຮັບການປະກັນໄພ ພາຍໃຕ້ການຄຸ້ມກັນຂອງສັນຍາປະກັນໄພການເດີນທາງສະບັບນີ້, ໃນກໍລະນີທີ່ບຸກຄົນດັ່ງກ່າວ ບໍ່ສາມາດໃຊ້ພາຫະນະເດີນທາງກັບ ສປປ ລາວ ຕາມແຜນການເດີມ ຍ້ອນການສົ່ງສົບຂອງຜູ້ໄດ້ຮັບປະກັນໄພກັບຄືນປະເທດ.

4.2.4 ກໍລະນີຜູ້ໄດ້ຮັບການປະກັນໄພຖືກສົ່ງຕົວກັບຄືນປະເທດເພື່ອຮັບການປິ່ນປົວ ຫຼື ເນື່ອງຈາກເສຍຊີວິດ ແລະ ຜູ້ໄດ້ຮັບການປະກັນໄພມີລູກທີ່ມີອາຍຸຕໍ່າກ່ວາ 12 ປີ ຫຼື ຜູ້ໄຮ້ຄວາມສາມາດເດີນທາງໄປມາ. ບໍລິສັດທີ່ໄດ້ຮັບມອບອານາດຈະດາເນີນການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍສໍາລັບປີ້ຍົນຊັ້ນປະຫຍັດໄປກັບ ເພື່ອທີ່ຈະໃຫ້ພີ່ນ້ອງຂອງທ່ານຈໍານວນໜຶ່ງທ່ານ ເດີນທາງໄປຮັບລູກຂອງທ່ານຊຶ່ງຢູ່ຄົນດຽວ ແລະ ພາເດີນທາງກັບຄືນເຮືອນຢູ່ປະເທດລາວ ເນື່ອງຈາກທ່ານໄດ້ຖືກສົ່ງຕົວກັບປະເທດ.

4.2.5 ຜູ້ໄດ້ຮັບການປະກັນໄພ ຕ້ອງເດີນທາງຮ່ວມພິທີສົບເນື່ອງຈາກການເສຍຊີວິດຂອງເມຍ ຫຼື ຜົວ, ລູກ ຫຼື ພໍ່ແມ່ ທີ່ອາໃສຢູ່ໃນປະເທດລາວ ຊຶ່ງບໍ່ໄດ້ເດີນທາງໄປກັບທ່ານ.

ບໍລິສັດທີ່ໄດ້ຮັບມອບອໍານາດຈະດໍາເນີນການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໃນການເດີນທາງກັບຄືນທີ່ພັກອາໃສ ສໍາລັບ ຜູ້ໄດ້ຮັບການປະກັນໄພ. ສິ່ງເຫຼົ່ານີ້ຈະດໍາເນີນການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໂດຍບໍລິສັດ ຫຼືບໍລິສັດທີ່ໄດ້ຮັບມອບອໍານາດ ໃນກໍລະນີຜູ້ໄດ້ຮັບການປະກັນໄພ ບໍ່ສາມາດເດີນທາງກັບຄືນປະເທດລາວ ໂດຍພາຫະນະທີ່ໄດ້ກຽມໄວ້ຕາມແຜນການເດີນທາງເກົ່າ.

*ການປະກັນໄພການເດີນທາງ ແລະ ບໍລິການຊ່ວຍເຫຼືອໃນການເດີນທາງ*

*ຄໍາແນະນໍາ ແລະ ການບໍລິການໃນການເດີນທາງ*

ຖ້າຜູ້ໄດ້ຮັບການປະກັນໄພຕ້ອງການຄໍາແນະນໍາໃນການເດີນທາງກ່ອນທີ່ຈະອອກເດີນທາງ ຫຼື ໃນຂະນະທີ່ກໍາລັງເດີນທາງ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດ ຈະໃຫ້ການຊ່ວຍເຫຼືອຕາມການຄຸ້ມກັນທີ່ ທ່ານເລືອກ ແລະໄດ້ລະບຸໄວ້ຢູ່ໃນສັນຍາປະກັນໄພ.
ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດ ຈະບໍ່ຮັບຜິດຊອບສໍາລັບຄໍາແນະນໍາດັ່ງກ່າວມານີ້ ບໍ່ວ່າທາງປາກເປົ່າ ແລະ ເປັນລາຍລັກອັກສອນ.

**4.3 ການຄຸ້ມກັນການຍົກເລີກການເດີນທາງ ແລະ ການຫຼຸດຈໍານວນມື້ການເດີນທາງ.**

4.3.1 ການຍົກເລີກການເດີນທາງ.

ບໍລິສັດຈະໃຫ້ການຄຸ້ມກັນຫຼັງຈາກມື້ທີ່ຜູ້ໄດ້ຮັບການປະກັນໄພໄດ້ຊື້ການເດີນທາງ, ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພມີຄວາມ ຈໍາເປັນ ແລະ ຫຼີກລ້ຽງບໍ່ໄດ້ທີ່ຈະຕ້ອງຍົກເລີກການເດີນທາງ ບໍລິສັດຈະຮັບຜິດຊອບຄ່າໃຊ້ຈ່າຍ ຕາມທີ່ໄດ້ລະບຸໄວ້ໃນຕາຕະ ລາງສະແດງຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການຕ່າງໆ ຊຶ່ງສາເຫດທີ່ຜູ້ໄດ້ຮັບການປະກັນໄພ ຕ້ອງຍົກເລີກການເດີນທາງ ຫຼັງຈາກມື້ທີ່ໄດ້ຊື້ການເດີນທາງ ຫຼືກ່ອນທີ່ຈະອອກເດີນທາງ ເນື່ອງຈາກສາເຫດໃດສາເຫດໜຶ່ງດັ່ງຕໍ່ໄປນີ້:

ການເສຍຊີວິດທີ່ຄາດການບໍ່ໄດ້, ການບາດເຈັບ ຫຼືການເຈັບເປັນ ທີ່ອາດຈະເຮັດໃຫ້ເສຍຊີວິດໄດ້ຂອງ:

- ຜູ້ໄດ້ຮັບການປະກັນໄພ
- ຜູ້ທີ່ຮ່ວມເດີນທາງຮ່ວມກັບຜູ້ໄດ້ຮັບການປະກັນໄພ
- ພີ່ນ້ອງທີ່ເດີນທາງ ຫຼື ບໍ່ໄດ້ເດີນທາງຮ່ວມກັບຜູ້ໄດ້ຮັບການປະກັນໄພ

ກໍລະນີການເຈັບເປັນ ຫຼື ອຸປະຕິເຫດ ຊຶ່ງເປັນສາເຫດຂອງການຍົກເລີກການເດີນທາງນັ້ນ ຈະຕ້ອງມີການຢັ້ງຢືນການປິ່ນປົວເປັນລາຍລັກອັກສອນຈາກແພດ ແລະ ຕ້ອງເປັນການປິ່ນປົວຈາກແພດທີ່ມີໃບອະນຸຍາດປະກອບວິຊາຊີບແພດ.

- ການຄຸ້ມກັນຄ່າໃຊ້ຈ່າຍການຍົກເລີກການເດີນທາງ

ບໍລິສັດຈະຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນສໍາລັບ ຄ່າຫ້ອງພັກທີ່ບໍ່ໄດ້ນໍາໃຊ້ ແລະ ຄ່າພາຫະນະການເດີນທາງ ຊຶ່ງຜູ້ໄດ້ຮັບ ການປະກັນໄພໄດ້ຈ່າຍເງິນແລ້ວ ຫຼືຈະຕ້ອງຈ່າຍຕາມສັນຍາ ຊຶ່ງບໍ່ສາມາດທວງຄືນໄດ້ຈາກຜູ້ໃດ, ການຈ່າຍເງິນຄືນໃຫ້ຜູ້ໄດ້ ຮັບ ການປະກັນໄພນັ້ນ ບໍລິສັດໄດ້ລວມທັງຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນການຈອງ ແຜນການທ່ອງທ່ຽວ ຊຶ່ງບໍ່ສາມາດທວງຄືນໄດ້ຈາກ ຜູ້ໃດ.
ບໍລິສັດຈະຮັບຜິດຊອບເປັນຈໍານວນເງິນບໍ່ເກີນກ່ວາຈໍານວນຄ່າໃຊ້ຈ່າຍທີ່ບໍ່ສາມາດທວງຄືນໄດ້ ເຊິ່ງເປັນຜົນມາຈາກການຍົກ ເລີກການເດີນທາງ ແລະຈໍານວນເງິນນີ້ຈະຕ້ອງໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນຈາກ ຕົວແທນບໍລິການ ການເດີນທາງ.

4.3.2 ການຫຼຸດຈໍານວນມື້ເດີນທາງ.

ບໍລິສັດຈະໃຫ້ການຄຸ້ມກັນແກ່ຜູ້ໄດ້ຮັບການປະກັນໄພ ໃນກໍລະນີທີ່ມີຄວາມຈໍາເປັນ ແລະ ຫຼີກລ້ຽງບໍ່ໄດ້ທີ່ຈະຕ້ອງຫຼຸດຈໍານວນມື້ໃນການເດີນທາງລົງ ພາຍຫຼັງທີ່ຜູ້ໄດ້ຮັບການປະກັນໄພໄດ້ອອກເດີນທາງໄປແລ້ວ ແລະ ກ່ອນທີ່ການເດີນທາງຈະສິ້ນສຸດລົງ ບໍລິສັດຈະຮັບ ຜິດຊອບຄ່າໃຊ້ຈ່າຍຕາມທີ່ລະບຸໄວ້ໃນຕາງຕະລາງສະແດງຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການຕ່າງໆ ສາເຫດທີ່ເຮັດໃຫ້ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຫຼຸດຈໍານວນມື້ເດີນທາງ ເນື່ອງມາຈາກສາເຫດໃດສາເຫດໜຶ່ງດັ່ງຕໍ່ໄປນີ້:

ການເສຍຊີວິດທີ່ຄາດຄະເນບໍ່ໄດ້, ການບາດເຈັບ ຫຼື ການເຈັບເປັນທີ່ອາດຈະເຮັດໃຫ້ ເສຍຊີວິດຂອງ:

ຜູ້ໄດ້ຮັບການປະກັນໄພ

ຜູ້ທີ່ເດີນທາງຮ່ວມກັບຜູ້ໄດ້ຮັບການປະກັນໄພ.

ກໍລະນີຜູ້ໄດ້ຮັບການປະກັນໄພເຈັບເປັນ ຫຼືເກີດອຸປະຕິເຫດ ທີ່ເປັນສາເຫດໃຫ້ຫຼຸດຈໍານວນມື້ ການຄຸ້ມກັນນັ້ນ, ຕ້ອງໄດ້ຮັບການ ປິ່ນປົວຈາກແພດ ຜູ້ທີ່ມີໃບອະນຸຍາດປະກອບວິຊາຊີບທາງການແພດ ແລະ ມີການຢັ້ງຢືນເປັນລາຍລັກອັກສອນ ຈາກແພດຂອງຜູ້ໄດ້ຮັບ ການປະກັນໄພ.

ການຄຸ້ມກັນຄ່າໃຊ້ຈ່າຍຂອງການຫຼຸດຈໍານວນມື້ການເດີນທາງ.

ບໍລິສັດຈະຮັບຜິດຊອບຕາມອັດຕາສ່ວນຂອງຄ່າໃຊ້ຈ່າຍ ທີ່ເກີດຂຶ້ນສໍາລັບຄ່າພາຫະນະທີ່ໃຊ້ໃນການເດີນທາງ ແລະ ຄ່າຫ້ອງນອນ ເຊິ່ງ ໄດ້ຈ່າຍຕາມສັນຍາ, ເຊິ່ງຈະຄິດໄລ່ຈາກຈໍານວນມື້ທີ່ແຕກຕ່າງກັນ ໂດຍຈະຄິດໄລ່ຕາມຈໍານວນມື້ຕົວຈິງ ກັບຈໍານວນມື້ທີ່ໄດ້ກໍານົດໄວ້.

**ຂໍ້ຍົກເວັ້ນ : ສໍາລັບການຍົກເລີກການເດີນທາງ ແລະການຫຼຸດຈໍານວນມື້ການເດີນທາງ.**

ກ) ການເຈັບເປັນ ຫຼື ອຸປະຕິເຫດທີ່ໄດ້ກວດພົບໃນເບື້ອງຕົ້ນ, ການປິ່ນປົວ, ການມີສະພາບ ຮ່າງກາຍ ທີ່ອ່ອນເພຍກ່ວາເກົ່າ, ອາການເຈັບຮ້າຍແຮງຂຶ້ນ, ການປິ່ນປົວທີ່ເກີດຂຶ້ນກ່ອນມື້ ຈອງການເດີນທາງ ແລະ ມື້ທີ່ໄດ້ເຮັດປະກັນໄພການເດີນທາງ.

ຂ) ການຖືພາ, ຍົກເວັ້ນການຖືພາຕາມປົກະຕິ ຫຼື ຄວາມສັບຊ້ອນໃນການຖືພາ ທີ່ບໍ່ອາດຈະຄາດການໄດ້.

ຄ) ການຂູດມົດລູກ, ການຫຼູລູກ, ການປິ່ນປົວການມີລູກຍາກ ແລະ ຜົນທີ່ອາດຈະເກີດຂຶ້ນຕາມມາ.

ງ) ການບໍ່ປະຕິບັດຕາມຕາຕະລາງການສັກວັກແຊງ.

ຈ) ຄວາມຜິດປົກະຕິທາງຈິດ, ລວມທັງຄວາມກັງວົນ ແຕ່ບໍ່ຈໍາກັດເຖິງການເປັນບ້າເສຍຈິດ.

ສ) ໂລກລະບາດ, ມົນລະພິດ, ໄພທໍາມະຊາດ.

ຊ) ຜົນທີ່ເກີດຂຶ້ນຕາມມາ ເນື່ອງຈາກຜູ້ໄດ້ຮັບການປະກັນໄພ ຖືກຕັ້ງຂໍ້ຫາທາງອາຍາ.

ຍ) ຜູ້ໄດ້ຮັບການປະກັນໄພ ບໍ່ສະໝັກໃຈທີ່ຈະເດີນທາງ ຫຼື ສູນເສຍຄວາມມ່ວນຊື່ນໃນການເດີນທາງ.

ດ) ເຫດການຕ່າງໆທີ່ໄດ້ຄາດຄະເນຢູ່ແລ້ວວ່າ ອາດຈະເກີດຂຶ້ນ ຫຼື ຮູ້ຢູ່ແລ້ວຕັ້ງແຕ່ມື້ທີ່ມາເຮັດປະກັນໄພ.

ຕ) ການນັດຢຸດງານ ຫຼື ການປະທ້ວງທີ່ເກີດຂຶ້ນມາກ່ອນແລ້ວ ຫຼື ໄດ້ເລີ້ມຕົ້ນຂຶ້ນກ່ອນທີ່ ຜູ້ໄດ້ຮັບການປະກັນໄພ ຈະມາ ເຮັດປະກັນໄພນີ້.

ຖ) ການຫລ້າຊ້າ ຫຼື ການແກ້ໄຂການເດີນທາງ ເນື່ອງຈາກຂໍ້ບັງຄັບຂອງລັດຖະບານ ຫຼື ຂໍ້ຈໍາກັດທາງກົດໝາຍ ຫຼື ຂໍ້ບັງຄັບ ຕ່າງໆ.

ທ) ການຮຽກຮ້ອງສິນທົດແທນທີ່ເກີດຂຶ້ນເນື່ອງຈາກ ຜູ້ໄດ້ຮັບການປະກັນໄພ ບໍ່ສາມາດເຮັດໜັງສືຜ່ານແດນ ຫຼືບໍ່ສາມາດຂໍ ວິຊາ ໃນການເດີນທາງ.

ນ) ການຮຽກຮ້ອງສິນທົດແທນເປັນຈໍານວນເງິນເກີນກ່ວາ 20,000 ໂດລາ ຕໍ່ໜຶ່ງທ່ານໃນກໍລະນີຂອງ ການຍົກເລີກ ຫຼື ຫຼຸດຈານວນມື້ ເດີນທາງ.

**4.4 ການຄຸ້ມກັນກະເປົາທີ່ໃຊ້ໃນການເດີນທາງສູນເສຍ ຫຼື ຖືກລັກ.**

ບໍລິສັດຈະໃຫ້ການຄຸ້ມກັນເປັນຈໍານວນເງິນສູງສຸດຕາມຕາຕະລາງສະແດງຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການ ຕ່າງໆ ສໍາລັບການ ສູນເສຍ ຫຼື ຖືກລັກ ຂອງກະເປົາທີ່ໃຊ້ໃນການເດີນທາງ ທີ່ຜູ້ໄດ້ຮັບການປະກັນໄພນໍາຕິດໂຕໄປ ຫຼື ໄດ້ຊື້ໃນລະຫວ່າງ ການເດີນທາງ. ຈໍານວນເງິນທີ່ບໍລິສັດຈະຈ່າຍໃຫ້ ສໍາລັບສິ່ງຂອງແຕ່ລະຊິ້ນສ່ວນ, ແຕ່ລະຄູ່ ຫຼືແຕ່ລະຊຸດ ແລະສໍາລັບຂອງມີຄ່າ ເຊິ່ງ ເປັນຂອງ ຜູ້ໄດ້ຮັບການປະກັນໄພ ຫຼືເປັນເຈົ້າຂອງຮ່ວມນັ້ນ ແລະຈໍານວນເງິນຄວາມເສຍຫາຍສູງສຸດ ທີ່ບໍລິສັດຈະຈ່າຍ ແມ່ນບໍ່ເກີນ ວົງເງິນຄຸ້ມກັນທີ່ລະບຸໄວ້ຢູ່ໃນຕາຕະລາງສະແດງຜົນປະໂຫຍດການຄຸ້ມກັນ ແລະການບໍລິການ.

ໃນກໍລະນີກະເປົາທີ່ໃຊ້ໃນການເດີນທາງເກີດການສູນເສຍ ຫຼື ຖືກລັກ, ຜູ້ໄດ້ຮັບການປະກັນໄພ ຈະຕ້ອງແຈ້ງ ຕໍາຫຼວດພາຍໃນ 24 ຊົ່ວໂມງ ນັບຕັ້ງແຕ່ມື້ທີ່ຮູ້ເລື້ອງ ແລະ ຕ້ອງມີລາຍງານເປັນລາຍລັກອັກສອນຈາກຕໍາຫຼວດ.

**ຂໍ້ຍົກເວັ້ນ**

ກະເປົາຖືກລັກ ຫຼື ການສູນເສຍ:

ກ) ທີ່ເກີດຈາກການຕັດສິນໃຈຂອງຜູ້ມີອໍານາດໃນການຄວບຄຸມດູແລທີ່ກ່ຽວຂ້ອງ ຫຼື ການຫ້າມ ການນໍາພາ ຫຼື ມີສິ່ງຂອງ ບາງຢ່າງ.

ຂ) ທີ່ເກີດຂຶ້ນໃນລະຫວ່າງການເຄື່ອນຍ້າຍ

ຄ) ທີ່ເກີດຈາກການລັກ ໂດຍພະນັກງານບໍລິສັດຂອງຜູ້ໄດ້ຮັບການປະກັນໄພ ທີ່ຢູ່ໃນລະຫວ່າງການປະຕິບັດໜ້າທີ່

ງ) ທີ່ເກີດຈາກການລັກ ໂດຍບໍ່ມີການງັດແງະ, ບຸກລຸກ ຫຼື ການໃຊ້ກຸນແຈຜີ.

ຈ) ທີ່ເກີດຂຶ້ນກັບການລັກກະເປົາເຊິ່ງໄດ້ວາງໄວ້ໂດຍບໍ່ມີການເບິ່ງແຍງຈາກເຈົ້າໜ້າທີ່ສາທາລະນະ.

ສ) ທີ່ເກີດຂຶ້ນເນື່ອງຈາກການທໍາລາຍເຊິ່ງເປັນຜົນມາຈາກ ຂໍ້ບົກຜ່ອງທີ່ເປັນຢູ່ແລ້ວຂອງກະເປົາທີ່ປະກັນໄພ ຫຼື ການເສື່ອມ ສະພາບຕາມປົກະຕິ ຫຼື ການຮົ່ວໄຫຼຂອງທາດແຫຼວ, ຄວາມມັນ, ການຍ້ອມສີ ຫຼື ສ່ວນປະກອບຂອງກະເປົາ ໃນການ ເດີນທາງທີ່ສາມາດຫຼູ້ຍຫ້ຽນໄດ້.

ຊ) ການລັກ ຫຼື ການສູນເສຍກະເປົາ ເນື່ອງຈາກບໍ່ໄດ້ມີການໃສ່ລ໋ອກ ຫຼື ຖືກປະໄວ້ໂດຍບໍ່ມີ ຄົນຮັກສາຊົ່ວໄລຍະເວລາໜຶ່ງ ໃນບ່ອນສາທາລະນະ.

ຍ) ການລັກ ຫຼື ສູນເສຍກະເປົາ ທີ່ເກີດຂື້ນໃນປະເທດລາວ ຍົກເວັ້ນການລັກ ຫຼື ສູນເສຍ ທີ່ເກີດຂື້ນເນື່ອງຈາກສາຍການບິນ ຫຼື ຕົວແທນຂອງສາຍການບິນ.

ດ) ການລັກ ຫຼື ການສູນເສຍທີ່ເກີດຂື້ນກັບສິ່ງຂອງມີຄ່າເຊິ່ງໄດ້ເກັບໄວ້ກັບໂຕ.

ຕ) ການລັກ ຫຼື ການສູນເສຍທີ່ເກີດຂື້ນໃນສະຖານທີ່ຕັ້ງຄ້າຍ.

ຖ) ການສູນເສຍເຊິ່ງຜູ້ໄດ້ຮັບການປະກັນໄພບໍ່ໄດ້ລາຍງານໃຫ້ເຈົ້າໜ້າທີ່ຮັບຮູ້ ຫຼື ຂໍຫຼັກຖານ ເປັນລາຍລັກອັກສອນ ມາຈາກ ບໍລິສັດສາຍການບິນ.

ທ) ຊັບສິນທີ່ຖືກຍຶດເອົາໄປ, ຖືກທຳລາຍ ຫຼື ຖືກເຮັດໃຫ້ເສຍຫາຍໂດຍຄຳສັ່ງຂອງລັດຖະບານ ຫຼື ໜ່ວຍງານຂອງຕຸລາການ.

ຊັບສິນທີ່ບໍ່ໄດ້ຮັບການຄຸ້ມຄອງ:

ກ) ເອກະສານຕ່າງໆ, ບັດປະຈຳຕົວ, ບັດເຄຣດິດ, ບັດແມ່ເຫຼັກ, ປີ້ທີ່ໃຊ້ສຳລັບການເດີນທາງ, ເງິນສົດ, ໃບຕາດິນ ແລະ ໜັງສືຄ້ຳປະກັນ. ກຸນແຈ, ເຄື່ອງຫລິ້ນສະກີ, ແຜ່ນກະດານສໍາລັບຫລິ້ນວິນເຊີບ, ອຸປະກອນການຫລິ້ນກ໊ອບ, ກະດານໂຕ້ ຄື້ນ, ອຸປະກອນດຳນ້ຳ, ລົດຖີບ, ອຸປະກອນສຳລັບການປີນເຂົາ, ອຸປະກອນສຳລັບໂດດຈ້ອງ, ອຸປະກອນເຄື່ອງຮ່ອນ, ເຮືອ

ຂ) ອຸປະກອນກ່ຽວກັບການປະກອບອາຊີບ, ສິນຄ້າຂອງພະນັກງານຂາຍສິນຄ້າ, ສິນຄ້າຕ່າງໆ

ຄ) ອຸປະກອນເຄື່ອງດົນຕີ, ເຄື່ອງສິນລະປະ, ເຄື່ອງລາຍຄາມ, ສິ່ງຂອງທີ່ກ່ຽວກັບພິທີທາງສາດສະໜາ, ເຄື່ອງຂອງສະສົມ ຕ່າງໆ

ງ) ແວ່ນຕາ (ແກ້ວແວ່ນຕາ ແລະ ກອບແວ່ນຕາ), ຄອນແທັກເລນສ, ອຸປະກອນອະໄວຍະວະທຽມຕ່າງໆ ຍົກເວັ້ນໃນກໍລະນີ ທີ່ຖືກທຳລາຍ ຫລື ເກີດຄວາມເສຍຫາຍ ໃນລະຫວ່າງປະສົບອຸປະຕິເຫດຢ່າງຮຸນແຮງຂອງຜູ້ໄດ້ຮັບການປະກັນໄພ, ເຄື່ອງປະກອບ (ຕົກແຕ່ງ) ລົດຍົນ, ເຟີນິເຈີ ແລະ ສິ່ງຂອງຕ່າງໆຢູ່ໃນລົດຄາລາວານ, ລົດສຳລັບໄປຕັ້ງຄ້າຍ ຫຼື ເຮືອ

ຈ) ອາຫານຕ່າງໆທີ່ບູດເນົ່າ, ເຫລົ້າວາຍ ແລະ ເຄື່ອງດື່ມປະເພດເຫລົ້າຕ່າງໆ

ສ) ວີດີໂອເກມ ແລະ ອຸປະກອນເສີມ (ເຄື່ອງຫຼີ້ນເກມ)

ຊ) ອຸປະກອນທາງການແພດ, ອະໄວຍະວະທຽມ ແລະ ຢາ

ຍ) ເຄື່ອງນຸ່ງ ແລະ ເຄື່ອງປະດັບທີ່ສວມໃສ່ໂດຍຜູ້ໄດ້ຮັບການປະກັນໄພ, ສັດຕ່າງໆ

## 4.5 ການຄຸ້ມກັນຖ້ຽວການບິນຫລ້າຊ້າ

ບໍລິສັດຈະຈ່າຍໃນກໍລະນີທີ່ຖ້ຽວບິນ, ຂະບວນລົດໄຟສາຍຕ່າງປະເທດ ຫຼື ເຮືອເດີນທະເລ ທີ່ຜູ້ໄດ້ຮັບການປະກັນໄພຈອງເອົາໄວ້ໄດ້ເກີດການຫລ້າຊ້າເກີນ 12 ຊົ່ວໂມງເຕັມ ເນື່ອງຈາກສາເຫດດັ່ງຕໍ່ໄປນີ້ :

ເຄື່ອງຈັກຂັດຂ້ອງຂອງລົດໄຟສາຍຕ່າງປະເທດ ຫຼື ຂອງເຮືອເດີນທະເລ.

ການຈອດຂອງຍົນເນື່ອງຈາກຄວາມຜິດປົກກະຕິຂອງເຄື່ອງຈັກ ຫຼື ໂຄງສ້າງ.

ການປະທ້ວງ ຫຼື ການນັດຢຸດງານ.

ເກີດເຫດການໄຟໄໝ້, ພະຍຸ ຫຼື ນ້ຳຖ້ວມຢ່າງຮຸນແຮງຢູ່ສະຖານທີ່ອອກເດີນທາງ.

ບໍລິສັດຈະຈ່າຍໃຫ້ແກ່ຜູ້ໄດ້ຮັບການປະກັນໄພເປັນຈຳນວນເງິນທີ່ໄດ້ລະບຸໄວ້ໃນຕາຕະລາງສະແດງຜົນປະໂຫຍດ ການຄຸ້ມກັນ ແລະ ບໍລິການຕ່າງໆ ສໍາລັບການຫລ້າຊ້າໃນແຕ່ລະ 12 ຊົ່ວໂມງເຕັມ ແຕ່ການຮຽກຮ້ອງສິນທົດແທນສາລັບການຫລ້າຊ້າໃນການເດີນທາງນັ້ນຈະຄຳນວນໂດຍເບິ່ງຈາກເວລາທີ່ແຕກຕ່າງກັນລະຫ່ວາງເວລາເດີນທາງເຖິງຈຸດໝາຍ ເຊິ່ງໄດ້ກຳນົດໄວ້ ກັບເວລາທີ່ເດີນທາງເຖິງຈຸດໝາຍຕົວຈິງ.

ຜູ້ໄດ້ຮັບການປະກັນໄພຕ້ອງສົ່ງລາຍງານເປັນລາຍລັກອັກສອນໃຫ້ແກ່ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ເຊິ່ງໃບລາຍງານນີ້ຈະຕ້ອງອອກໃຫ້ໂດຍໜ່ວຍງານທີ່ຮັບຜິດຊອບສຳລັບຄວາມຫລ້າຊ້າ ຂອງພາຫະນະການເດີນທາງແຕ່ລະຊະນິດ (ສາຍການບິນ, ຂະບວນລົດໄຟສາຍຕ່າງປະເທດ ຫຼື ເຮືອເດີນທະເລ).

**ຂໍ້ຍົກເວັ້ນ.**

ກ) ສິ່ງໃດກໍ່ຕາມທີ່ເປັນຜົນມາຈາກການທີ່ຜູ້ໄດ້ຮັບການປະກັນໄພບໍ່ສາມາດເຂົ້າກວດຢູ່ຈຸດທີ່ອອກເດີນທາງໄດ້ທັນເວລາບໍ່ວ່າດ້ວຍເຫດໃດໆກໍ່ຕາມ.
ຂ) ສໍາລັບຄວາມເສຍຫາຍທີ່ເກີດຂຶ້ນໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພບໍ່ໄດ້ນໍາເອົາໜັງສືຈາກສາຍການບິນ, ບໍລິສັດລົດໄຟ ຫຼື ບໍລິສັດຈັດການເດີນທາງໆເຮືອເຊິ່ງລະບຸເຖິງສາເຫດຂອງຄວາມຫລ້າຊ້າ ເວລາເຖິງຈຸດໝາຍເຊິ່ງໄດ້ກໍານົດໄວ້ຕາມຕາຕະລາງ ແລະ ເວລາທີ່ເດີນທາງເຖິງຈຸດໝາຍຕົວຈິງຂອງຖ້ຽວບິນ, ຂະບວນລົດໄຟສາຍຕ່າງປະເທດ ຫຼື ເຮືອເດີນທະເລ.
ຄ) ຄວາມຫລ້າຊ້າທີ່ເກີດຂຶ້ນເນື່ອງຈາກການນັດຢຸດງານ ຫຼື ການປະທ້ວງ ເຊິ່ງໄດ້ເລີ້ມຂຶ້ນ ຫຼື ໄດ້ປະກາດກ່ອນວັນທີອອກສັນຍາປະກັນໄພຂອງຜູ້ໄດ້ຮັບປະກັນໄພ ຫຼື ວັນທີທີ່ລະບຸໄວ້ໃນປີ້ເດີນທາງ ຫຼື ວັນທີ ທີ່ມີການຢັ້ງຢືນການເດີນທາງໂດຍໃຫ້ກໍານົດເອົາວັນທີທີ່ມາກ່ອນ.
ງ) ການທີ່ລະບົບຂົນສົ່ງມວນຊົນໃຊ້ການບໍ່ໄດ້ ເນື່ອງຈາກການນັດຢຸດງານ ຫຼື ການປະທ້ວງ ເຊິ່ງໄດ້ເລີ້ມຂຶ້ນ ຫຼື ໄດ້ປະກາດກ່ອນທີ່ຜູ້ໄດ້ຮັບປະກັນໄພຈະອອກຈາກເຮືອນ ຫຼື ສະຖານທີ່ໆຜູ້ໄດ້ຮັບການປະກັນໄພຄອນທີ່ຈະສາມາດດໍາເນີນການປ່ຽນແປງການເດີນທາງໄດ້.
ຈ) ຈໍານວນເງິນທີ່ຈ່າຍໄປນັ້ນສາມາດຈະທວງຄືນໄດ້ຈາກພາກສ່ວນອື່ນ.

### 4.6 ການຄາດເຄື່ອນຕໍ່ຖ້ຽວບິນ

ບໍລິສັດຈະຈ່າຍສິນທົດແທນໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຄາດເຄື່ອນຕໍ່ຖ້ຽວບິນ, ລົດໄຟສາຍຕ່າງປະເທດ ຫຼື ເຮືອເດີນທະເລ ທີ່ໄດ້ຈອງໄວ້ເນື່ອງຈາກການເດີນທາງມາເຖິງຫລ້າຊ້າຂອງຖ້ຽວບິນ, ລົດໄຟສາຍຕ່າງປະເທດ ຫຼື ເຮືອທີ່ມີສາເຫດມາຈາກ :

ເຄື່ອງຈັກຂັດຂ້ອງຂອງລົດໄຟສາຍຕ່າງປະເທດ ຫຼື ຂອງເຮືອເດີນທະເລ.
ການຈອດຂອງຍົນເນື່ອງຈາກຄວາມຜິດປົກກະຕິຂອງເຄື່ອງຈັກ ຫຼື ໂຄງສ້າງ.
ການປະທ້ວງ ຫຼື ການນັດຢຸດງານ.
ເກີດເຫດການໄຟໄໝ້, ພະຍຸ ຫຼື ນໍ້າຖ້ວມຢ່າງຮຸນແຮງຢູ່ສະຖານທີ່ອອກເດີນທາງ.

ໂດຍທີ່ຜູ້ໄດ້ຮັບການປະກັນໄພບໍ່ສາມາດຈະຈັດຫາພາຫະນະເດີນທາງຢ່າງຕໍ່ເນື່ອງເປັນເວລາເກີນກວ່າ 12 ຊົ່ວໂມງເຕັມ ນັບຈາກເວລາທີ່ເດີນທາງມາເຖິງ ໂດຍພາຫະນະການເດີນທາງຄັ້ງທໍາອິດ.

ບໍລິສັດຈະຈ່າຍສິນທົດແທນຕາມຈໍານວນເງິນທີ່ໄດ້ລະບຸໄວ້ໃນຕາຕະລາງສະແດງຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການຕ່າງໆ ສໍາລັບການຫລ້າຊ້າທຸກໆ 12 ຊົ່ວໂມງເຕັມ ໂດຍທີ່ບໍລິສັດຈະຈ່າຍບໍ່ເກີນຈານວນເງິນສູງສຸດທີ່ລະບຸໄວ້ໃນຕາຕະລາງສະແດງຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການຕ່າງໆ.

ນອກເໜືອຈາກບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດ ຈະດໍາເນີນການ ແລະ ຮັບຜິດຊອບສໍາລັບຄ່າທີ່ພັກຄ້າງຄືນໃນໂຮງແຮມ ໃນກໍລະນີທີ່ມີການຫລ້າຊ້າໃນການເດີນທາງຢ່າງຕໍ່ເນື່ອງ ເປັນເວລາ 12 ຊົ່ວໂມງເຕັມ ບໍລິສັດຈະຈ່າຍໃຫ້ຕາມຈານວນທີ່ລະບຸໄວ້ໃນຕາຕະລາງຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການຕ່າງໆ.

ການຄິດໄລ່ຈໍານວນເງິນສິນທົດແທນນັ້ນຈະຄິດໄລ່ຈາກເວລາທີ່ເດີນທາງມາເຖິງຕົວຈິງຈົນເຖິງເວລາທີ່ອອກເດີນທາງໂດຍພາຫະນະທົດແທນ ຜູ້ໄດ້ຮັບການປະກັນໄພຕ້ອງສົ່ງລາຍງານເປັນລາຍລັກອັກສອນໃຫ້ແກ່ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດ ຊຶ່ງໃບລາຍງານນີ້ຈະຕ້ອງອອກໃຫ້ໂດຍໜ່ວຍງານທີ່ຮັບຜິດຊອບ ສໍາລັບການຫລ້າຊ້າຂອງພາຫະນະການເດີນທາງແຕ່ລະຊະນິດ (ສາຍການບິນ, ຂະບວນລົດໄຟສາຍຕ່າງປະເທດ ຫຼື ເຮືອເດີນທະເລ).

### ຂໍ້ຍົກເວັ້ນ

ກ) ສິ່ງໃດກໍ່ຕາມທີ່ເປັນຜົນມາຈາກການທີ່ຜູ້ໄດ້ຮັບການປະກັນໄພບໍ່ສາມາດເຂົ້າກວດ ຢູ່ຈຸດທີ່ອອກເດີນທາງໄດ້ທັນເວລາ ບໍ່ວ່າດ້ວຍສາເຫດໃດກໍຕາມ.
ຂ) ສໍາລັບຄວາມເສຍຫາຍທີ່ເກີດຂຶ້ນໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພບໍ່ໄດ້ນໍາເອົາໜັງສືຈາກສາຍການບິນ, ບໍລິສັດລົດໄຟ ຫຼື ບໍລິສັດຈັດການເດີນທາງໆເຮືອເຊິ່ງລະບຸເຖິງສາເຫດຂອງການຫລ້າຊ້າເວລາເຖິງຈຸດໝາຍເຊິ່ງໄດ້ກໍານົດໄວ້ຕາມຕາຕະລາງ ແລະ ເວລາທີ່ເດີນທາງເຖິງທີ່ໝາຍຕົວຈິງຂອງຖ້ຽວບິນ, ຂະບວນລົດໄຟສາຍຕ່າງປະເທດ ຫຼື ເຮືອເດີນທະເລ.

ຄ) ການຫລ້າຊ້າທີ່ເກີດຂື້ນເນື່ອງມາຈາກນັດຢຸດງານ ຫຼື ການປະທ້ວງ ຊຶ່ງໄດ້ເລີ້ມຂື້ນ ຫຼື ໄດ້ປະກາດກ່ອນວັນທີອອກສັນຍາປະກັນໄພຈະມີຜົນຄຸ້ມກັນ ຫຼື ວັນທີທີ່ໄດ້ລະບຸໄວ້ໃນປີ້ເດີນທາງ ຫຼື ວັນທີທີ່ມີການຢັ້ງຢືນການເດີນທາງໂດຍໃຫ້ກຳນົດເອົາວັນທີທີ່ມາກ່ອນ.

ງ) ການທີ່ລະບົບການຂົນສົ່ງມວນຊົນໃຊ້ການບໍ່ໄດ້ເນື່ອງຈາກການນັດຢຸດງານ ຫຼື ການປະທ້ວງເຊິ່ງໄດ້ເລີ້ມຂື້ນ ຫຼື ໄດ້ປະກາດກ່ອນທີ່ຜູ້ໄດ້ຮັບການປະກັນໄພຈະອອກຈາກເຮືອນ ຫຼື ສະຖານທີ່ໆສາມາດດຳເນີນການປ່ຽນແປງການເດີນທາງໄດ້.

ຈ) ຈຳນວນເງິນທີ່ຈ່າຍໄປນັ້ນສາມາດທວງຄືນໄດ້ຈາກຜູ້ອື່ນພາກສ່ວນອື່ນ.

ສ) ຄ່າໃຊ້ຈ່າຍທີ່ເກີດຂື້ນສຳລັບທີ່ພັກຄ້າງຄືນທີ່ບໍ່ໄດ້ຈັດໃຫ້ໂດຍບໍລິສັດທີ່ໄດ້ຮັບມອບອຳນາດ.

## 4.7 ການຄຸ້ມກັນການໃຫ້ບໍລິການເງິນສົດສຳຮອງລ່ວງໜ້າ

ບໍລິສັດຈະທຳການກະກຽມ ແລະ ຈັດສົ່ງເງິນສົດສຳຮອງລ່ວງໜ້າ ໃຫ້ເປັນຈຳນວນເງິນບໍ່ເກີນທີ່ໄດ້ລະບຸໄວ້ ໃນຕາຕະລາງສະແດງຜົນປະໂຫຍດຂອງການຄຸ້ມກັນ ແລະ ການບໍລິການຕ່າງໆ ໃນກໍລະນີເງິນຕິດຕົວຂອງຜູ້ໄດ້ຮັບການປະກັນໄພສູນເສຍ ຫຼື ຖືກລັກໃນລະຫວ່າງການເດີນ ທາງໂດຍບໍ່ຄຳນຶງເຖິງວ່າ ຜູ້ໄດ້ຮັບການປະກັນໄພຈະເປັນເຈົ້າຂອງຄົນດຽວ ຫຼື ເຈົ້າຂອງຮ່ວມ.

**ຂໍ້ຍົກເວັ້ນ**

ກ) ກໍລະນີຜູ້ໄດ້ຮັບການປະກັນໄພ ບໍ່ແຈ້ງໃຫ້ຕຳຫຼວດຮູ້ ເຖິງການສູນເສຍ ຫຼືຖືກລັກ ພາຍໃນ 24 ຊົ່ວໂມງນັບຈາກເວລາທີ່ຮູ້ເຖິງເຫດການນັ້ນ ແລະບໍ່ໄດ້ຮັບບັນທຶກປະຈຳວັນເປັນລາຍລັກອັກສອນມາຈາກຕຳຫຼວດ.

ຂ) ການສູນເສຍທີ່ເກີດຂື້ນໃນປະເທດລາວ.

ໜ້າທີ່ຂອງຜູ້ໄດ້ຮັບການປະກັນໄພ

- ຜູ້ໄດ້ຮັບການປະກັນໄພຕ້ອງສົ່ງບົດບັນທຶກປະຈຳວັນທີ່ເປັນລາຍລັກອັກສອນຂອງຕຳຫຼວດ ໃຫ້ແກ່ບໍລິສັດພາຍໃນ 24 ຊົ່ວໂມງ.
- ຜູ້ໄດ້ຮັບການປະກັນໄພຕ້ອງດູແລ ແລະ ຮັກສາເງິນຕິດຕົວຂອງຕົວເອງໄວ້ເປັນຢ່າງດີ
- ໃນກໍລະນີຂອງການໃຫ້ເງິນສຳຮອງລ່ວງໜ້າ ຜູ້ໄດ້ຮັບການປະກັນໄພຕ້ອງໃຫ້ລາຍລະອຽດກ່ຽວກັບບັດເຄຼດິດ ກັບບໍລິສັດເພື່ອຄວາມສະດວກໃນການສຳລະຄືນໃຫ້ແກ່ບໍລິສັດ.
- ຜູ້ໄດ້ຮັບການປະກັນໄພຕ້ອງໃຫ້ການຢັ້ງຢືນເປັນລາຍລັກອັກສອນວ່າ ຜູ້ສະເໜີເອົາການປະກັນໄພຍິນຍອມທີ່ຈະຈ່າຍເງິນໃຫ້ແກ່ບໍລິສັດ ແລະ ຈະທຳການຈ່າຍພາຍໃນ 14 ວັນນັບຈາກວັນທີເກີດການສູນເສຍ.
- ຖ້າຜູ້ໄດ້ຮັບການປະກັນໄພບໍ່ສາມາດສຳລະເງິນຄືນໃຫ້ແກ່ບໍລິສັດໄດ້ພາຍໃນ 14 ວັນ ນັບຈາກວັນທີ່ເກີດຄວາມສູນເສຍນັ້ນ ບໍລິສັດຈະຄິດໄລ່ດອກເບ້ຍຕາມອັດຕາທີ່ກົດໝາຍແພ່ງກຳນົດ, ໂດຍດອກເບ້ຍນັ້ນຈະເພີ້ມເຂົ້າໄປກັບຈຳນວນເງິນຕົ້ນທີ່ຈະຕ້ອງ ຈ່າຍຄືນໃຫ້ແກ່ບໍລິສັດ.

## 4.8 ການຄຸ້ມກັນຄວາມຮັບຜິດຊອບຕາມກົດໝາຍ

4.81. ບໍລິສັດຈະໃຫ້ການຄຸ້ມກັນຄວາມຮັບຜິດຊອບຕາມກົດໝາຍແພ່ງ ຊຶ່ງເຮັດໃຫ້ຜູ້ໄດ້ຮັບການປະກັນໄພອາດຈະຕ້ອງຮັບຜິດຊອບໃນການໃຊ້ແທນເປັນຈຳນວນເງິນ ໂດຍອີງຕາມກົດໝາຍຂອງປະເທດທີ່ຜູ້ໄດ້ຮັບການປະກັນໄພຢູ່ ຊຶ່ງເປັນຜົນມາຈາກການທີ່ເຮັດໃຫ້ບຸກຄົນອື່ນໄດ້ຮັບຄວາມເສຍຫາຍທີ່ເກີດ :

- o ໂດຍຜູ້ໄດ້ຮັບການປະກັນໄພເອງ.
- o ໂດຍບຸກຄົນທີ່ຜູ້ໄດ້ຮັບການປະກັນໄພຕ້ອງຮັບຜິດຊອບ.
- o ໂດຍສິ່ງຂອງ ຫຼື ສັດທີ່ຢູ່ໃຕ້ການຄຸ້ມຄອງຂອງຜູ້ໄດ້ຮັບການປະກັນໄພ.

4.8.2 ບໍລິສັດຈະໃຫ້ການຄຸ້ມກັນສະເພາະການກະທຳຕາມປົກກະຕິວິໃສໃນຊີວິດປະຈຳວັນລະຫ່ວາງເດີນທາງ.

4.8.3 ບໍລິສັດຈະໃຫ້ການຄຸ້ມກັນສຳລັບການບາດເຈັບທາງດ້ານຮ່າງກາຍ, ຄວາມເສຍຫາຍຕໍ່ຊັບສິນທີ່ເກີດຂື້ນກັບບຸກຄົນອື່ນທີ່ບໍ່ແມ່ນຜູ້ໄດ້ຮັບການປະກັນໄພ ແລະ ການສູນເສຍທີ່ອາດຈະເກີດຂື້ນຕາມມາ ໂດຍບໍລິສັດຈະຮັບຜິດຊອບບໍ່ເກີນຈຳນວນເງິນທີ່ໄດ້ລະບຸໄວ້ໃນຕາຕະລາງ ຜົນປະໂຫຍດການຄຸ້ມກັນ ແລະ ການບໍລິການຕ່າງໆ ແລະ ຈະໃຫ້ຄ່າທົດແທນສູງສຸດຕໍ່ເຫດການນັ້ນ ແລະ ເປັນຈຳນວນເງິນຂອງການຄຸ້ມກັນລວມສຳ ລັບການບາດເຈັບທາງດ້ານຮ່າງກາຍ, ການສູນເສຍຕໍ່ຊັບສິນ ແລະ ການສູນເສຍທີ່ອາດເກີດຂື້ນຕາມມາ.

**ຂໍ້ຍົກເວັ້ນ**

ກ) ຄ່າປັບໃໝ ຫຼື ການຖືກລົງໂທດທຸກຮູບແບບ.
ຂ) ຄວາມຮັບຜິດຊອບຕາມກົດໝາຍທີ່ເກີດໃນລັກສະນະດັ່ງຕໍ່ໄປນີ້:

ຄວາມຮັບຜິດຊອບຕາມກົດໝາຍເກີດຂຶ້ນເນື່ອງມາຈາກລູກຈ້າງຂອງຜູ້ໄດ້ຮັບການປະກັນໄພ ຫຼື ສໍາມະຊິກໃນຄອບຄົວ ແລະ ຄວາມເສຍຫາຍນັ້ນເກີດຂຶ້ນເນື່ອງມາຈາກການເຮັດວຽກຕາມໜ້າທີ່ຂອງບຸກຄົນດັ່ງກ່າວ.

ຄວາມຮັບຜິດຊອບຕາມກົດໝາຍເກີດຂຶ້ນ ເນື່ອງມາຈາກການວ່າຈ້າງງານຂອງຜູ້ໄດ້ຮັບການປະກັນໄພ ຫຼື ການວ່າຈ້າງງານຂອງສະມາຊິກໃນຄອບຄົວ ຂອງຜູ້ໄດ້ຮັບການປະກັນໄພ.

ຄວາມຮັບຜິດຊອບຕາມກົດໝາຍເກີດຂຶ້ນ ເນື່ອງມາຈາກສັດລ້ຽງທີ່ຢູ່ໃນການຄຸ້ມຄອງຂອງຜູ້ໄດ້ຮັບການປະກັນໄພ ຍົກເວັ້ນມ້າ, ໝາບ້ານ ແລະ ແມວ.

ຄວາມຮັບຜິດຊອບຕາມກົດໝາຍເກີດຂຶ້ນ ເນື່ອງມາຈາກຜູ້ໄດ້ຮັບການປະກັນໄພໃຊ້ອາວຸດຕ່າງໆ.

ຄວາມຮັບຜິດຊອບຕາມກົດໝາຍເກີດຂຶ້ນ ເນື່ອງມາຈາກການທີ່ຜູ້ໄດ້ຮັບການປະກັນໄພ ຕົກລົງໃຈທີ່ຈະຮັບຜິດຊອບ ໃນສິ່ງທີ່ບໍ່ຄວນຈະຕ້ອງຮັບຜິດໂດຍບໍ່ໄດ້ຮັບຄວາມຍິນຍອມຈາກບໍລິສັດ.

ຜູ້ໄດ້ຮັບການປະກັນໄພມີສ່ວນຮ່ວມໃນກິດຈະກໍາທີ່ມີອັນຕະລາຍ ຍົກເວັ້ນຜູ້ໄດ້ຮັບການປະກັນໄພຂໍໃຫ້ຂະຫຍາຍການຄຸ້ມກັນຄວາມຮັບຜິດຊອບຕາມກົດໝາຍ ສໍາລັບກິດຈະກໍານັ້ນ ເຊິ່ງເປັນສາເຫດຂອງການເຮັດໃຫ້ເກີດການຮ້ອງຟ້ອງສິນທົດແທນ ພາຍໃຕ້ຄວາມຮັບຜິດຊອບຕາມກົດໝາຍ.

ຄ) ເງິນທົດແທນ ຫຼື ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເນື່ອງມາຈາກອຸປະຕິເຫດທີ່ມີສາເຫດມາຈາກຜູ້ໄດ້ຮັບການປະກັນໄພຄອບຄອງ ຫຼື ເປັນເຈົ້າຂອງດັ່ງຕໍ່ໄປນີ້ :

ການໃຊ້ທີ່ດິນ ຫຼື ອາຄານ ຍົກເວັ້ນສໍາລັບທີ່ພັກ ຫຼື ຜູ້ໄດ້ຮັບການປະກັນໄພໄດ້ອາໃສຢູ່ໃນລະຫວ່າງການເດີນທາງ.

ຍານພາຫະນະຂັບເຄື່ອນໂດຍເຄື່ອງຈັກ ແລະ ລົດພ່ວງທີ່ຕິດຢູ່ກັບຍານພາຫະນະນັ້ນ.

ຍົນ, ພາຫະນະທາງນໍ້າທີ່ຂັບເຄື່ອນໂດຍເຄື່ອງຈັກ ຫຼື ເຮືອໃບ ຍົກເວັ້ນເຮືອທີ່ໄດ້ຖືກອອກແບບມາເພື່ອເປັນທີ່ພັກອາໃສໃນລະຫວ່າງການເດີນທາງຂອງທ່ານ.

## 5. ການຮຽກຮ້ອງສິນທົດແທນ

ເມື່ອເກີດຄວາມສູນເສຍ ຫຼື ເສຍຫາຍໃດໆ ແລະ ຜູ້ໄດ້ຮັບການປະກັນໄພຈະຮຽກຮ້ອງສິນທົດແທນ ຜູ້ໄດ້ຮັບການປະກັນໄພຕ້ອງປະຕິບັດດັ່ງນີ້:

### 5.1 ຜູ້ໄດ້ຮັບການປະກັນໄພຈະຕ້ອງຕິດຕໍ່ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບໝາຍໃຫ້:

5.1.1 ແຈ້ງຊື່ ແລະ ເລກທີສັນຍາປະກັນໄພ ທີ່ລະບຸໄວ້ຢູ່ໃນສັນຍາປະກັນໄພ.

5.1.2 ແຈ້ງລາຍລະອຽດທັງໝົດວ່າມີເຫດການໃດເກີດຂຶ້ນ ເພື່ອໃຫ້ແບບຟອມການຮຽກຮ້ອງສິນທົດແທນ ໃຊ້ໄດ້ຢ່າງຖືກຕ້ອງ.

5.1.3 ເມື່ອໄດ້ຮັບແບບຟອມການຮຽກຮ້ອງສິນທົດແທນແລ້ວ ຄວນຈະໃຫ້ລາຍລະອຽດ ແລະ ສົ່ງໃຫ້ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດໄວເທົ່າທີ່ຈະໄວໄດ້ ພ້ອມທັງຄັດຕິດຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ ເພື່ອໃຊ້ປະກອບໃນການຮຽກຮ້ອງສິນທົດແທນ.

### 5.2 ຂໍ້ສໍາຄັນທີ່ຜູ້ໄດ້ຮັບການປະກັນໄພຄວນຮູ້ກ່ອນທີ່ຈະດໍາເນີນການຮຽກຮ້ອງສິນທົດແທນ

5.2.1 ພະຍາຍາມທຸກວິທີທາງທີ່ຈະປ້ອງກັນຄວາມສູນເສຍ ຫຼື ຄວາມເສຍຫາຍ ຜູ້ໄດ້ຮັບການປະກັນໄພ ຄວນປະຕິບັດຕົນຄືກັບວ່າຕົນບໍ່ມີປະກັນໄພ.

5.2.2 ຈະຕ້ອງບໍ່ຕົກລົງ ປະຕິເສດ ຫຼື ເຈລະຈາ ກ່ຽວກັບການຮຽກຮ້ອງສິນທົດແທນ ໂດຍບໍ່ໄດ້ຮັບອະນຸຍາດຈາກບໍລິສັດ.

5.2.3 ຈະຕ້ອງໃຫ້ຂໍ້ມູນທຸກຢ່າງກ່ຽວກັບການຮຽກຮ້ອງສິນທົດແທນ ຊຶ່ງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອໍານາດໄດ້ຮ້ອງຂໍ.

5.2.4 ຈະຕ້ອງຊ່ວຍບໍລິສັດໃນການດໍາເນີນການ ຕາມກົດໝາຍກັບບຸກຄົນໃດໆ ເມື່ອຈໍາເປັນ.

5.2.5 ຈະຕ້ອງປະຕິບັດຢ່າງເຕັມຄວາມສາມາດ ເພື່ອທີ່ຈະໄດ້ຄືນມາ ສິ່ງຂອງທີ່ໄດ້ສູນຫາຍ ຫຼື ຖືກລັກໄປ ແລະ ເມື່ອມີການສອບຖາມຜູ້ໄດ້ຮັບການປະກັນໄພຈະຕ້ອງລະບຸວ່າ ບຸກຄົນໃດທີ່ຜູ້ໄດ້ຮັບການປະກັນໄພປະກັນໄພເຊື່ອວ່າ ເປັນຜູ້ທີ່ຄວນຈະຕ້ອງຮັບຜິດຊອບ ສໍາລັບຄວາມສູນເສຍ ແລະ ໃຫ້ ຄວາມຮ່ວມມື ໃນການດໍາເນີນການຕາມກົດໝາຍເມື່ອຈໍາເປັນ.

5.2.6 ຈະຕ້ອງແຈ້ງໃຫ້ບໍລິສັດຮູ້ ເຖິງການຄຸ້ມກັນປະເພດດຽວກັນ ທີ່ຜູ້ໄດ້ຮັບການປະກັນໄພ ອາດຈະໄດ້ຮັບຈາກປະກັນໄພອື່ນ. ບໍລິສັດ ຈະຈ່າຍສິນທົດແທນໃຫ້ຕາມອັດຕາສ່ວນສະເລ່ຍ ທີ່ບໍລິສັດຈະຕ້ອງຮັບຜິດຊອບ.

**5.3 ເມື່ອໃດທີ່ຜູ້ໄດ້ຮັບການປະກັນໄພຈະຕ້ອງແຈ້ງ ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບໝາຍ ເຖິງການ ຮຽກຮ້ອງສິນທົດແທນ.**

ຖ້າເຫດການທີ່ເກີດຂຶ້ນໄດ້ຮັບການຄຸ້ມຄອງ ພາຍໃຕ້ສັນຍາປະກັນໄພ ຜູ້ໄດ້ຮັບການປະກັນໄພ ຫຼື ຕົວແທນຂອງຜູ້ໄດ້ຮັບການປະກັນໄພ ຈະຕ້ອງແຈ້ງໃຫ້ບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ຮັບຮູ້ຕາມໄລຍະເວລາທີ່ໄດ້ກຳນົດໄວ້ດັ່ງນີ້:

– ເມື່ອຈະຕ້ອງມີການສົ່ງບຸກຄົນກັບພູມລຳເນົາເດີມ, ການເສຍຊີວິດ ຫຼື ການເຂົ້າຮັບການປິ່ນປົວໃນໂຮງໝໍ ຕ້ອງແຈ້ງໃຫ້ຮູ້ໂດຍ ທັນທີ.

– ສຳລັບເຫດການອື່ນໆ ຈະຕ້ອງແຈ້ງໃຫ້ຮູ້ ໂດຍໄວທີ່ສຸດເທົ່າທີ່ຈະເປັນໄປໄດ້ ຫລື ບໍ່ເກີນ 15 ວັນ ນັບຈາກວັນທີ່ເກີດເຫດ ການນັ້ນໆ

ຖ້າບໍ່ມີການແຈ້ງເຖິງການສູນເສຍ ຫລື ຄວາມເສຍຫາຍທີ່ເກີດຂຶ້ນໃຫ້ແກ່ ບໍລິສັດ ຫລື ບໍລິສັດທີ່ໄດ້ຮັບມອບອຳນາດຮັບຮູ້ຕາມ ໄລຍະເວລາທີ່ໄດ້ກຳນົດໄວ້ ບໍລິສັດຈະບໍ່ຈ່າຍສິນທົດແທນ ນອກຈາກວ່າ ຜູ້ໄດ້ຮັບການປະກັນໄພ ຫລື ຕົວແທນຂອງຜູ້ໄດ້ຮັບການ ປະກັນໄພຈະສາມາດພິສູດໃຫ້ເຫັນໄດ້ວ່າ ສາເຫດຂອງການຫລ້າຊ້າໃນການແຈ້ງເຖິງການສູນເສຍ ຫລື ຄວາມເສຍຫາຍນັ້ນ ບໍ່ໄດ້ເກີດຈາກຄວາມຜິດຂອງຕົນເອງ, ແຕ່ຢ່າງໃດກໍຕາມ ຖ້າບໍລິສັດບໍ່ໄດ້ຮັບການແຈ້ງເຖິງການສູນເສຍ ຫລື ຄວາມເສຍຫາຍ ພາຍໃນ 180 ວັນ ນັບຈາກເຫດການນັ້ນໆໄດ້ເກີດຂຶ້ນ ສິດໃນການຮຽກຮ້ອງສິນທົດແທນຂອງຜູ້ໄດ້ຮັບການປະກັນໄພນັ້ນ ຖືວ່າໄດ້ສິ້ນສຸດ ແລະ ບໍ່ສາມາດຈະຮຽກຮ້ອງໄດ້.

**5.4 ຜູ້ໄດ້ຮັບການປະກັນໄພຈະໄດ້ຮັບສິນທົດແທນເມື່ອ:**

ບໍລິສັດພິຈາລະນາຈ່າຍສິນທົດແທນແລ້ວ ແລະ ຜູ້ໄດ້ຮັບການປະກັນໄພ ຈະໄດ້ຮັບຄ່າສິນທົດແທນຈາກ ບໍລິສັດ ພາຍໃນ 10 ວັນ ນັບຈາກວັນທີ່ໄດ້ຮັບການຕົກລົງໃນເລື່ອງຂອງສິນທົດແທນຮຽບຮ້ອຍແລ້ວ ຜົນປະໂຫຍດຂອງການຮຽກຮ້ອງຄ່າສິນທົດແທນຕ່າງໆ ຈະ ຈ່າຍໃຫ້ກັບຜູ້ໄດ້ຮັບການປະກັນໄພ ຍົກເວັ້ນຜົນປະໂຫຍດຈາກການເສຍຊີວິດ ຊຶ່ງຈະຈ່າຍໃຫ້ກັບຜູ້ຮັບຜົນປະໂຫຍດ ຊຶ່ງໄດ້ມີການລະບຸຊື່ໄວ້ໃນສັນ ຍາປະກັນໄພ.

**5.5 ເມື່ອຜູ້ໄດ້ຮັບການປະກັນໄພຮຽກຮ້ອງສິນທົດແທນ ບໍລິສັດສະຫງວນລິຂະສິດ ແລະ ຄວາມຮັບຜິດຊອບດັ່ງນີ້**

**5.5.1 ການກວດສອບທາງການແພດ**

ບໍລິສັດ ຫລື ບໍລິສັດທີ່ຮັບມອບອຳນາດ ມີສິດທີ່ຈະຮ້ອງຂໍໃຫ້ຜູ້ໄດ້ຮັບການປະກັນໄພ ເຂົ້າຮັບການກວດສອບທາງການແພດ ລວມໄປເຖິງການສັນ ລະສູດສົບ ໃນກໍລະນີທີ່ມີຄວາມຈຳເປັນ ໃນລະຫວ່າງພິຈະລະນາເລື່ອງການຊົດໃຊ້ສິນທົດແທນ.

**5.5.2 ສະພາບທີ່ເກີດຂຶ້ນຢູ່ກ່ອນແລ້ວ.**

ບໍລິສັດຈະບໍ່ຈ່າຍສິນທົດແທນໃຫ້ແກ່ການຮຽກຮ້ອງທີ່ເກີດຂຶ້ນໂດຍກົງ ຫລື ໂດຍທາງອ້ອມຈາກສະພາບທີ່ເກີດຂຶ້ນມາກ່ອນແລ້ວ ຍົກເວັ້ນແຕ່ວ່າຜູ້ໄດ້ຮັບການປະກັນໄພໄດ້ແຈ້ງໃຫ້ບໍລິສັດຮູ້ເຖິງສະພາບນັ້ນໆ ໃນຂະນະທີ່ຊື້ປະກັນໄພການເດີນທາງ ແລະ ບໍລິສັດໄດ້ຕົກລົງ ເປັນລາຍລັກ ອັກສອນວ່າ ຍອມຮັບສະພາບນັ້ນໆ.

**5.5.3 ພາຫະນະໃນການເດີນທາງ.**

ເມື່ອບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ ເປັນຜູ້ຈັດການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໃນເລື່ອງຂອງຍານພາຫະນະ ໃນການເດີນທາງພາຍໃຕ້ການຄຸ້ມຄອງ ພາຫະນະໃນການເດີນທາງນັ້ນຈະເປັນ ລົດໄຟຊັ້ນ 1 ຫຼື ທາງເຄື່ອງບິນໃນຊັ້ນປະຫຍັດ ຫຼື ທາງແທັກຊີ ຂຶ້ນຢູ່ກັບການ ຕັດສິນໃຈຂອງບໍລິສັດ ຫຼື ບໍລິສັດທີ່ໄດ້ຮັບມອບອຳນາດ, ໃນລັກສະນະນີ້ຈະຖືວ່າ ບໍລິສັດເປັນເຈົ້າຂອງປີ້ການເດີນທາງນັ້ນ. ຖ້າໃນເບື້ອງຕົ້ນ ຜູ້ໄດ້ຮັບການປະກັນໄພ ບໍ່ໄດ້ມີການຊື້ປີ້ຂາກັບ ບໍລິສັດຂໍສະຫງວນສິດທີ່ຈະຮຽກຮ້ອງຄ່າໃຊ້ຈ່າຍ ຈາກຜູ້ໄດ້ຮັບການປະກັນໄພໃນສ່ວນທີ່ຜູ້ໄດ້ ຮັບການປະກັນໄພ ຄວນຈະເປັນຜູ້ຮັບຜິດຊອບໃນການເດີນທາງນັ້ນໆ.

**5.5.4 ຂອບເຂດ ການໃຫ້ຄວາມຊ່ວຍເຫລືອຂອງບໍລິສັດ ຫລື ບໍລິສັດທີ່ໄດ້ຮັບອານາດ**

ຂອບເຂດການໃຫ້ຄວາມຊ່ວຍເຫລື່ອຂອງບໍລິສັດ ຫລື ບໍລິສັດທີ່ໄດ້ຮັບມອບອຳນາດນັ້ນ ຈະຢູ່ພາຍໃຕ້ກົດໝາຍ ແລະ ຂໍ້ບັງຄັບຂອງປະເທດ ນັ້ນໆ.

ການບໍລິການຂອງບໍລິສັດ ຫລື ບໍລິສັດທີ່ໄດ້ຮັບມອບອຳນາດ ຈະຢູ່ພາຍໃຕ້ການຍິນຍອມຂອງໜ່ວຍງານທີ່ກ່ຽວຂ້ອງກັບບໍລິສັດ ແລະ/ ຫລື ບໍລິສັດທີ່ໄດ້ຮັບມອບອຳນາດ ຈະບໍ່ຮັບຜິດຊອບສຳລັບຄວາມຫລ້າຊ້າ ຫລື ການຂັດຂວາງການໃຫ້ບໍລິການ ຕາມທີ່ໄດ້ຕົກລົງ ເນື່ອງຈາກ

ເຫດ ສຸດວິໄສຈາກເຫດການ ເຊັ່ນ: ການນັດຢຸດງານ, ການຈໍລະຈອນ, ການລຸກຮື້ຂອງປະຊາຊົນ, ຂໍ້ຈຳກັດໃນການເຄື່ອນຍ້າຍຢ່າງເສລີ, ການກໍ່ວິນາດສະກຳ, ການກໍ່ການຮ້າຍ, ສົງຄາມກາງເມືອງ ຫລື ສົງຄາມຕ່າງຊາດ, ຜົນທີ່ເກີດຕາມມາຂອງສານກຳມັນຕະພາບລັງສີ ຫລື ເຫດການ ໄພທຳມະຊາດຕ່າງໆ.

**5.5.5 ການສໍ້ໂກງ**

ຖ້າຜູ້ໄດ້ປະກັນໄພ ຫລື ຕົວແທນຂອງຜູ້ໄດ້ຮັບການປະກັນໄພ ໃຊ້ວິທີທີ່ບໍ່ຊື່ສັດໃນການຮຽກຮ້ອງສິນທົດແທນ ພາຍໃຕ້ສັນຍາສະບັບນີ້ ຫລື ຊື້ການຄຸ້ມກັນນີ້ໂດຍຜູ້ໄດ້ຮັບການປະກັນໄພ ມີລັກສະນະບໍ່ຖືກຕາມເງື່ອນໄຂຂອງສັນຍານັ້ນ ຈະສູນເສຍຜົນປະໂຫຍດພາຍໃຕ້ສັນຍາສະບັບນີ້ ທັງໝົດຜົນປະໂຫຍດທີ່ໄດ້ຮຽກຮ້ອງໄປໂດຍການສໍ້ໂກງນັ້ນ ຈະຕ້ອງຈ່າຍຄືນໃຫ້ທາງບໍລິສັດຄືນທັງໝົດ

**5.5.6 ອາຍຸຄວາມ ແລະ ຄວາມຮັບຜິດຊອບຕາມກົດໝາຍພາຍໃຕ້ສັນຍາສະບັບນີ້**

ນັບຈາກວັນທີທີ່ຜູ້ໄດ້ຮັບປະກັນໄພຈະຕ້ອງສົ່ງຫລັກຖານ ເປັນລາຍລັກອັກສອນສຳລັບການສູນເສຍນັ້ນໆ ໄດ້ຜ່ານພົ້ນໄປເປັນເວລາ 2 ປີ ແລ້ວ ຜູ້ໄດ້ຮັບປະກັນໄພບໍ່ສາມາດທີ່ຈະດຳເນີນການຕາມກົດໝາຍ ຫລື ທຳການຮຽກຮ້ອງສິນທົດແທນໃດໆ ພາຍໃຕ້ສັນຍາປະກັນໄພນີ້ ໄດ້ອີກ.

**5.5.7 ການຮັບຊ່ວງສິດ**

ໃນກໍລະນີທີ່ມີການຈ່າຍສິນທົດແທນ ພາຍໃຕ້ສັນຍາສະບັບນີ້ ບໍລິສັດຈະເຂົ້າສວມສິດ ຂອງຜູ້ໄດ້ຮັບການປະກັນໄພ ເພື່ອທີ່ຈະໃຊ້ສິດນັ້ນ ໃນການຮຽກຮ້ອງຕໍ່ບຸກຄົນ ຫຼື ອົງກອນທີ່ມີສ່ວນຮັບຜິດຊອບ ໃນການສູນເສຍນັ້ນ ແລະ ຜູ້ໄດ້ຮັບການປະກັນໄພຈະຕ້ອງດຳເນີນການຈັດສົ່ງ ເອກະສານ ແລະ ສິ່ງຂອງໃດໆ ຫຼື ທຳການໃດໆ ທີ່ຈຳເປັນເພື່ອທີ່ຈະຮັກສາສິດທິ ໃນການຮຽກຮ້ອງນັ້ນໄວ້ ໂດຍຜູ້ໄດ້ຮັບການປະກັນໄພຈະຕ້ອງບໍ່ກະທຳການໃດໆ ທີ່ຈະເຮັດໃຫ້ສູນເສຍສິດທີດັ່ງກ່າວພາຍຫລັງທີ່ເກີດຄວາມສູນເສຍແລ້ວນັ້ນ.

**5.5.8 ການຕັ້ງຄະນະກາມະການແກ້ໄຂຂໍ້ຂັດແຍ່ງ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງ ຫລື ຂໍ້ຮຽກຮ້ອງໃດໆ ພາຍໃຕ້ສັນຍາປະກັນໄພນີ້ ລະຫວ່າງຜູ້ມີສິດຮຽກຮ້ອງ ຕາມສັນຍາປະກັນໄພ ກັບບໍລິສັດ ແລະ ຫາກຜູ້ມີສິດຮຽກຮ້ອງ ມີຈຸດປະສົງ ແລະ ເຫັນຄວນຢຸດຕິຂໍ້ຂັດແຍ່ງນັ້ນ ໂດຍວິທີການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ບໍລິສັດຕົກລົງ ຍິນຍອມ ແລະ ໃຫ້ຕັດສິນຊີ້ຂາດໂດຍຄະນະກຳມະການ ແກ້ໄຂຂໍ້ຂັດແຍ່ງທາດ້ານເສດຖະກິດຕາມລະບຽບການ ຂອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ

| |
|---|
| ຫຼັກຖານສຳລັບການຮຽກຮ້ອງສິນທົດແທນ.<br><br>ເພື່ອຄວາມວ່ອງໄວໃນການດຳເນີນການ ທາງດ້ານການຮຽກຮ້ອງສິນທົດແທນ ຫຼັກຖານທີ່ສຳຄັນ ເພື່ອປະກອບ ການພິຈາລະນາມີດັ່ງນີ້ : (ຕົ້ນສະບັບຕົວຈິງເທົ່ານັ້ນ ຄວນຈະເປັນພາສາອັງກິດ)<br><br>– ໃບຢັ້ງຢືນຈາກແພດ ແລະ ບົດລາຍງານທາງການແພດ ໂດຍແພດຜູ້ທຳການປິ່ນປົວ.<br>– ໃບບິນຮັບເງິນຄ່າປິ່ນປົວທີ່ລະບຸລາຍການລະອຽດ.<br>– ເອກະສານ ບັນທຶກອຸປະຕິເຫດຈາກເຈົ້າໜ້າທີ່ຕຳຫຼວດ (ກໍລະນີເກີດອຸປະຕິເຫດ ຫຼື ເກີດການລັກຊັບ) |

**ຕາຕະລາງທີ 1: ການອະນຸຍາດ ໃຫ້ສື່ສານຜ່ານຊ່ອງທາງດິຈິຕອນ ແລະ ໃຫ້ສື່ສານຂໍ້ມູນການຕະຫຼາດ**

**DIGITAL COMMUNICATION CONSENT**

BY agreeing to purchase this insurance, you agree to receive via SMS and/or via e-mail by the mobile number and/or e-mail address provided herein above, respectively on contract renewal notice, premium and/or claim payment status and any information of your interest on this insurance. Please visit https://www.azlaos.com to view Assurances General Laos Data Privacy Notice.

**ການອະນຸຍາດໃຫ້ສື່ສານຜ່ານຊ່ອງທາງດິຈິຕອນ**

ໂດຍການຕົກລົງຊື້ສັນຍາປະກັນໄພນີ້, ທ່ານໄດ້ຕົກລົງທີ່ຈະໄດ້ຮັບຂໍ້ມູນກ່ຽວກັບການແຈ້ງຕໍ່ສັນຍາ, ການແຈ້ງສະຖານະການຊາລະຄ່າທຳນຽມປະກັນໄພ ແລະ/ຫຼື ການຈ່າຍສິນທົດແທນປະກັນໄພ ແລະ ຂໍ້ມູນອື່ນໆທີ່ເປັນປະໂຫຍດສຳລັບທ່ານກ່ຽວກັບການປະກັນໄພ ຜ່ານ

ທາງຂໍ້ຄວາມສັ້ນ (SMS) ຫາເບີມືຖື ແລະ/ຫຼື ອີເມວ ຕາມທີ່ທ່ານສະໜອງໃຫ້ໃນໃບສະເໜີເອົາປະກັນໄພນີ້. ທ່ານສາມາດເຂົ້າເບິ່ງລາຍລະອຽດແຈ້ງການກ່ຽວກັບຂໍ້ມູນຄວາມເປັນສ່ວນຕົວໄດ້ທີ່ https://www.azlaos.com

**Marketing CONSENT**

BY purchasing this insurance, you give consent to Assurances General Laos to use your personal information for the marketing purpose of the company e.g. communication on product/service, promotional activities, carrying out lucky draws, marketing surveys, and other information which you may be interested in. in the event you would like to withdraw your marketing consent, please send SMS consent "123" to +856 20 56689805 or opt-out via My Insurance Web and My Insurance App.

**ການອະນຸຍາດໃຫ້ສື່ສານຂໍ້ມູນການຕະຫຼາດ**

ໂດຍການຕົກລົງຊື້ປະກັນໄພນີ້, ທ່ານອະນຸຍາດໃຫ້ ບໍລິສັດ ປະກັນໄພລາວ, ນາໃຊ້ຂໍ້ມູນສ່ວນຕົວຂອງທ່ານເພື່ອຈຸດປະສົງໃນການຕິດຕໍ່ ແລະ ສົ່ງຂໍ້ມູນທາງການຕະຫຼາດຂອງບໍລິສັດ ເຊັ່ນ: ການບໍລິການ ແລະ ຜະລິດຕະພັນປະກັນໄພ, ກິດຈະກາສົ່ງເສີມການຂາຍ, ການຈັບສະຫຼາກຊິງໂຊກ, ການສໍາຫຼວດຕະຫຼາດ, ແລະ ຂໍ້ມູນອື່ນໆທີ່ທ່ານອາດຈະມີຄວາມສົນໃຈ. ຖ້າທ່ານບໍ່ອະນຸຍາດໃຫ້ໃຊ້ຂໍ້ມູນສ່ວນຕົວເພື່ອຈຸດປະສົງດັ່ງກ່າວ ທ່ານສາມາດແຈ້ງປະຕິເສດຮັບຂໍ້ມູນ ໂດຍການສົ່ງຂໍ້ຄວາມສັ້ນ (SMS) ພິມຄໍາວ່າ " 123 " ສົ່ງໄປທີ່ເບີ +856 20 56689805 ຫຼື ແຈ້ງຜ່ານທາງ My Insurance Web ແລະ My Insurance App.